ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

30 ມິຖຸນາ - 06 ກໍລະກົດ 2023
ປີທີ 12
ສະບັບທີ 929
ລາຍສັບປະດາ

## ສສຊ ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ



(ສພຊ) ໃນລະຫວ່າງວັນທີ 26-30 ມິຖຸນາ 2023 ພາຍໃຕ້ການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມເປັນຄະນະປະທານກອງປະຊຸມ; ອາທິດທຳອິດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ດຳເນີນໄປຢ່າງມີຈຸດສຸມ ແລະ ກົງໄປກົງມາ ໂດຍປະທານກອງປະຊຸມໄດ້ຕັ້ງຄຳຖາມເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຢ່າງເລິກເຊິ່ງ ບັນດາທ່ານສະມາຊິກສະພາແຫ່ງຊາດ

ອ່ານຕໍ່ໜ້າ 3

## ສານຊົມເຊີຍ ຂອງປະທານສະພາແຫ່ງຊາດລາວ ເນື່ອງໃນວັນລັດຖະສະພາໂລກ

(ສພຊ) ໃນຕອນເຊົ້າວັນທີ 30 ມິຖຸນາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ປະທານຄະນະສະຫະພັນລັດຖະສະພາສາກົນ ຂອງສະພາແຫ່ງຊາດລາວ ໄດ້ສົ່ງສານຊົມເຊີຍເນື່ອງໃນວັນລັດຖະສະພາໂລກ ວັນທີ 30 ມິຖຸນາ 2023 ທີ່ສະພາແຫ່ງຊາດລາວ ເຊິ່ງເນື້ອໃນຂອງສານຊົມເຊີຍ ມີດັ່ງນີ້: ເນື່ອງໃນໂອກາດວັນລັດຖະສະພາໂລກ (International Day of Parliamentarism) ແລະ ວັນສ້າງຕັ້ງສະຫະພັນລັດຖະສະພາສາກົນ (IPU) ຄົບຮອບ 134 ປີ (30 ມິຖຸນາ 1889-30 ມິຖຸນາ 2023), ໃນນາມ




ປະທານສະພາແຫ່ງຊາດ ແລະ ປະທານຄະນະສະຫະພັນລັດຖະສະພາສາກົນ ຂອງ ສປປ ລາວ, ຂ້າພະເຈົ້າ ຂໍສົ່ງຄວາມຊົມເຊີຍ ແລະ ພອນໄຊອັນປະເສີດ ໄປຍັງບັນດາການນຳ, ສະມາຊິກລັດຖະສະພາປະເທດ

ອ່ານຕໍ່ໜ້າ 4

## ຄຳເຫັນສັງລວມຕໍ່ວາລະແຫ່ງຊາດວ່າດ້ວຍ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

(ສພຊ) ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນກ່ຽວກັບການສັງລວມຄຳເຫັນຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນວັນທີ 29 ມິຖຸນາ 2023 ວ່າ: ຕະຫຼອດໄລຍະເວລາທີ່ຜ່ານມາ ລັດຖະບານໄດ້ມີຄວາມພະຍາຍາມ ແລະ ສຸມທຸກກຳລັງ ເຂົ້າໃນການນຳພາຈັດຕັ້ງປະຕິບັດວາລະແຫ່ງຊາດ ຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ ໄດ້ຮັບຜົນສຳເລັດຫຼາຍດ້ານ. ຄຽງຄູ່ກັນນັ້ນ, ກໍບໍ່ສາມາດຫຼີກລ່ຽງໄດ້ບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ຜ່ານການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ດັ່ງນີ້:

1. ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄດ້ເປັນທິດທາງ ແລະ ເປັນກຳລັງແຮງຊຸກຍູ້ ເຮັດໃຫ້ວຽກງານຈຸດສຸມຫຼາຍດ້ານ ສາມາດບັນລຸ

ອ່ານຕໍ່ໜ້າ 4

## ປະທານສະພາແຫ່ງຊາດລາວ ຕ້ອນຮັບນາຍົກລັດຖະມົນຕີມາເລເຊຍ

(ສພຊ) ວັນທີ 27 ມິຖຸນາ 2023 ທີ່ສະພາແຫ່ງຊາດລາວ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບທ່ານ ອັນວາ ອິບບຣາຮິມ ນາຍົກລັດຖະມົນຕີ ແຫ່ງ ມາເລເຊຍ ພ້ອມດ້ວຍຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການໃນລະຫວ່າງວັນທີ 26-27 ມິຖຸນາ 2023.



ໃນໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການມາຢ້ຽມຢາມ ສປປ ລາວ ຂອງທ່ານນາຍົກລັດຖະມົນຕີ ມາເລເຊຍ ພ້ອມດ້ວຍຄະນະ ເຊິ່ງຢູ່ໃນທ່າມກາງບັນຍາກາດທີ່ສະພາແຫ່ງຊາດ ແຫ່ງ ສປປ ລາວ ພວມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະແດງຄວາມເຊື່ອໝັ້ນວ່າການມາຢ້ຽມຢາມຄັ້ງນີ້ ຈະປະກອບ

ອ່ານຕໍ່ໜ້າ 8

## ຕົ້ນປີ 2023 ໄດ້ເຊັນສັນຍາ ສຳປະທານບໍ່ແຮ່ໃນຮູບແບບທົດລອງ 89 ບໍລິສັດ

(ສພຊ) ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄລຍະປີ 2021-2023 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 29 ມິຖຸນາ 2023 ເຊິ່ງທ່ານໄດ້ກ່າວວ່າ: ຜ່ານການຈັດຕັ້ງປະຕິບັດຕົວຈິງໃນໄລຍະເກືອບ 2 ປີຜ່ານມາ, ສາມາດສະຫຼຸບຕີລາຄາໄດ້ເຖິງ



ຜົນໄດ້ຮັບ ແລະ ດ້ານອ່ອນ-ຂໍ້ຄົງຄ້າງຂອງການຈັດຕັ້ງປະຕິບັດບັນດາຄາດໝາຍ, ວຽກຈຸດສຸມຂອງວາລະແຫ່ງຊາດ ແລະ ບັນດາມາດຕະການທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງລັດຖະບານ ດັ່ງນີ້:

1. ວຽກງານຈຸດສຸມການສົ່ງເສີມການຜະລິດ-ການບໍລິການ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າ ສົ່ງອອກ.

1.1 ດ້ານກະສິກຳ-ປ່າໄມ້:

- ຜົນສຳເລັດທີ່ພົ້ນເດັ່ນແມ່ນການສຸມໃສ່ຜະລິດສະບຽງອາຫານເພື່ອຮັບໃຊ້ພາຍໃນ ເຊິ່ງສາມາດຜະລິດເຂົ້າເພື່ອຄ້ຳປະກັນສະບຽງອາຫານໂດຍຜະລິດເຂົ້າເປືອກລວມໃນ

ອ່ານຕໍ່ໜ້າ 8

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂະຫຍາຍຕາໜ່າງການແລກປ່ຽນເງິນຕາ 11 ແຫ່ງ

(ສພຊ) ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ (ທຫລ) ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 26 ມິຖຸນາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023 ເຊິ່ງໃຫ້ຮູ້ວ່າ: ເສດຖະກິດຂອງ ສປປ ລາວ ແມ່ນຍັງຢູ່ໃນລະຫວ່າງການຟື້ນຕົວ ແຕ່



ກໍຍັງຢູ່ໃນຈັງຫວະທີ່ຊ້າ ເນື່ອງຈາກຍັງພົບກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ເປັນຕົ້ນໂຄງສ້າງເສດຖະກິດມະຫາພາກ ຍັງຂາດຄວາມສົມດູນ, ການຂາດດຸນງົບປະມານ ແລະ ເງິນຕາ, ພັນທະຊຳລະໜີ້ສິນຕ່າງປະເທດສູງ, ຄັງແຮສຳຮອງເງິນຕາຕ່າງປະເທດຕ່ຳ ແລະ ບັນຫາການຜະລິດຍັງບໍ່ທັນແຂງແຮງ ຍັງເປັນສິ່ງທ້າທາຍໃຫຍ່ຫຼວງໃຫ້ແກ່ການຮັກສາຄຽງລະພາບດ້ານເງິນຕາແຫ່ງຊາດ ກໍຄື ສະຖຽນລະພາບຂອງເສດຖະກິດມະຫາພາກ.

ອ່ານຕໍ່ໜ້າ 4

**ຊົມເຊີຍ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

# ນາຍົກລັດຖະມົນຕີ ລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ

ຕໍ່ຈາກສະບັບກ່ອນ...

- ການພັດທະນາການບໍລິການແລະໂຄງລ່າງພື້ນຖານເພື່ອຮອງຮັບການທ່ອງທ່ຽວ: ຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການທ່ອງທ່ຽວປັບປຸງພື້ນຖານໂຄງລ່າງການທ່ອງທ່ຽວ ໂດຍສະເພາະໂຮງແຮມ, ຮ້ານອາຫານ ແລະ ພາຫະນະຂົນສົ່ງ ດ້ວຍນະໂຍບາຍສົ່ງເສີມດ້ານສິນເຊື່ອໃຫ້ຜູ້ປະກອບການ ຈົນເຮັດໃຫ້ທຸລະກິດສາມາດຟື້ນຕົວໄດ້ໄວ ເຊິ່ງໃນ 6 ເດືອນຕົ້ນປີ 2023 ສາມາດເກັບລາຍຮັບງົບປະມານຈາກຜູ້ປະກອບການທ່ອງທ່ຽວເພີ່ມຂຶ້ນ 132% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ສຸມໃສ່ການປັບປຸງການບໍລິການທ່ອງທ່ຽວ ໂດຍສະເພາະການບໍລິການຜູ້ໂດຍສານລົດໄຟ ລາວ-ຈີນ ທີ່ໃນເບື້ອງຕົ້ນກໍມີທາງສຽງຈົ່ມວ່າຫຼາຍ, ຜ່ານການປັບປຸງກໍເຫັນວ່າດີຂຶ້ນກວ່າເກົ່າ, ໄດ້ສຸມໃສ່ຊີ້ນຳການປັບປຸງຂັ້ນຂອດການອຳນວຍຄວາສະດວກ ໃນການຂົນສົ່ງສິນຄ້າ ຢູ່ດ່ານຊາຍແດນ, ຢູ່ທ່າບົກ ແລະ ການຂົນສົ່ງຜ່ານທາງລົດໄຟ ລາວ-ຈີນ ເຊິ່ງກໍສາມາດຫຼຸດຜ່ອນທາງສຽງຈົ່ມວ່າ ແລະ ຂັດຂ້ອງຂອງຜູ້ປະກອບການລົງ, ແຕ່ກໍຍັງຈະໄດ້ສືບຕໍ່ປັບປຸງຢ່າງແຂງແຮງ ເພື່ອເພີ່ມຄວາມສາມາດແຂ່ງຂັນກັບປະເທດໃກ້ຄຽງ.

- ການປັບປຸງ ແລະ ແກ້ໄຂກົນໄກ, ຂັ້ນຂອດ ເພື່ອສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ ແລະ ການລົງທຶນ ໄດ້ສືບຕໍ່ປັບປຸງກົນໄກອຳນວຍຄວາມສະດວກ ແລະ ສົ່ງເສີມການລົງທຶນ ຕາມນະໂຍບາຍ ແລະ ຄຳສັ່ງຂອງລັດຖະບານ ເປັນຕົ້ນ ການຄົ້ນຄວ້າປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງແລະຂັ້ນແຂວງ (ຄລທ.ສ ແລະ ຄລທ.ຂ) ໂດຍໄດ້ຂັ້ນຕອນ ແລະ ເອກະສານທີ່ບໍ່ຈຳເປັນອອກ ເພື່ອເຮັດໃຫ້ການອະນຸຍາດລົງທຶນວ່ອງໄວ, ໂປ່ງໃສ ແລະ ສະດວກກວ່າເກົ່າ; ພ້ອມກັນນັ້ນ ກໍໄດ້ຊຸກຍູ້ ແລະ ຕິດຕາມການຈັດຕັ້ງໂຄງການຂະໜາດໃຫຍ່ໃຫ້ດຳເນີນຕາມແຜນທີ່ກຳນົດໄວ້ ໂດຍສະເພາະໂຄງການພະລັງງານໄຟຟ້າຄວາມຮ້ອນຢູ່ພາກໃຕ້ ທີ່ໄດ້ເຊັນສັນຍາຊື້ຂາຍໄຟຟ້າກັບກຳປູເຈຍແລ້ວ, ໄດ້ເລັ່ງປັບປຸງຂັ້ນ



ຂອດການບໍລິການຂົນສົ່ງສິນສິນຄ້າຜ່ານດ່ານຊາຍແດນ ແລະ ບັນດາທ່າບົກໃຫ້ງ່າຍດາຍ, ວ່ອງໄວ ແລະ ສະດວກກວ່າເກົ່າ, ພ້ອມກັນນັ້ນ ກໍເລັ່ງຄົ້ນຄວ້າການເກັບຄ່າບໍລິການຜ່ານທ່າບົກໃຫ້ສົມເຫດສົມຜົນ ແລະ ເປັນເອກະພາບກັນ;

- ການແກ້ໄຂຜົນການກວດສອບ ແລະ ກວດກາ: ໄດ້ເອົາໃຈໃສ່ຊີ້ນຳການແກ້ໄຂຜົນການກວດສອບແຫ່ງລັດ ໂດຍສະເພາະຜົນການກວດສອບທີ່ຕິດພັນກັບການລົງທຶນຂອງລັດ ເຊິ່ງສາມາດຫັກລົບມູນຄ່າໂຄງການທີ່ນອນໃນແຜນການລົງທຶນຂອງລັດທີ່ບໍ່ໄດ້ປະຕິບັດອອກ ໄດ້ຈຳນວນ 134 ໂຄງການ, ມູນຄ່າ 880,11 ຕື້ກີບ (ຕາມມະຕິສະພາ: ຜົນກວດສອບເຫັນມີ 363 ໂຄງການ ມູນຄ່າ 1.347,72 ຕື້ກີບ ແລະ 104.891,81 ໂດລາສະຫະລັດ); ໄດ້ເອົາໂຄງການນອກແຜນຈຳນວນ 13 ໂຄງການ, ມູນຄ່າ 128,44 ຕື້ກີບ ເຂົ້າບັນຈຸໃນແຜນ ແລະ ໄດ້ໂຈະການປະຕິບັດ 2 ໂຄງການ ມູນຄ່າ 19,54 ຕື້ກີບ.

5. ການຮັກສາສະຖຽນລະພາບດ້ານເງິນຕາ: ລັດຖະບານ ໄດ້ສຸມໃສ່ແກ້ໄຂບັນຫາການເໜັງຕີງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ ເພື່ອປະຄັບປະຄອງການເໜັງຕີງດັ່ງກ່າວໃຫ້ຊະລໍຕົວໃນຈັງຫວະທີ່ຊ້ຳລົງ ແລະ ເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນໃນລະບົບທະນາຄານ ແລະ ນອກລະບົບ ຫຍັບເຂົ້າໃກ້ກັນ (ແຕ່ໄລຍະເດືອນມິຖຸນາ ເລີ່ມມີການເໜັງຕີງແຮງ), ໃນນີ້: ໄດ້ປິດຮ້ານແລກປ່ຽນເງິນທັງໝົດ ແລະ ມອບໃຫ້ທະນາຄານທຸລະກິດສ້າງເປັນປ່ອງບໍລິການຂອງທະນາຄານຄືກັບປະເທດອື່ນໆ, ປັດຈຸບັນ ບັນດາທະນາຄານກຳລັງສຸມໃສ່ຂະຫຍາຍປ່ອງບໍລິການແລກປ່ຽນເງິນຕາຂອງຕົນໃຫ້ຫຼາຍຂຶ້ນ ແລະ ກຳລັງທົດລອງອະນຸມັດໃຫ້ທະນາຄານສາມາດແລກປ່ຽນເງິນຜ່ານລະບົບອອນລາຍທາງບັນຊີ. ພ້ອມນັ້ນ, ກໍໄດ້ຄຸມເຂັ້ມການໂອນເງິນຊື້-ຂາຍສິນຄ້າ ແລະ ເງິນທີ່ນຳເຂົ້າມາລົງທຶນ ຕ້ອງຜ່ານລະບົບທະນາຄານ; ໄດ້ແກ້ໄຂການສະໜອງເງິນຕາຕ່າງປະເທດ ຈຳນວນ 264,08 ລ້ານໂດລາ ໃຫ້ແກ່ບໍລິສັດທີ່ນຳເຂົ້ານ້ຳມັນເຊື້ອໄຟກວມເອົາ 49,96% ຂອງຄວາມຕ້ອງການເງິນຕາທັງໝົດໃນການຊື້ນ້ຳມັນ ເຊິ່ງສາມາດສະໜອງນ້ຳມັນເຊື້ອໄຟໃຫ້ສັງຄົມໄດ້ຢ່າງປົກກະຕິ (ເຖິງລາຄາແພງແດ່ ແຕ່ກໍບໍ່ໄດ້ລຽນຄິວ).

6. ການປະຕິຮູບລັດວິສາຫະກິດ ລັດຖະບານ ໄດ້ອອກເປັນມະຕິໃນການແບ່ງຄວາມຮັບຜິດຊອບໃນການປັບປຸງລັດວິສາຫະກິດ ທັງໄດ້ກຳນົດບັນຊີລັດວິສາຫະກິດທີ່ຈະປັບປຸງຢ່າງລະອຽດ. ການປັບປຸງແມ່ນສຸມໃສ່ປັບປຸງປະສິດທິຜົນຂອງການບໍລິຫານ ໂດຍໂຮມບັນດາພະແນກ ຫຼື ໜ່ວຍງານເຂົ້າກັນ ແລະ ພະແນກ ຫຼື ໜ່ວຍງານໃດທີ່ບໍ່ຈຳເປັນ ກໍໄດ້ລົບລ້າງ, ປັບໂຄງສ້າງໜີ້ສິນຂອງລັດວິສາຫະກິດ ແລະ ປັບປຸງໂຄງສ້າງການຖືຮຸ້ນ ເພື່ອໃຫ້ການບໍລິຫານຈັດການເປັນມືອາຊີບ ແລະ ມີຄວາມໂປ່ງໃສ. ຜ່ານການປັບປຸງ ເຫັນວ່າການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດຈຳນວນໜຶ່ງມີທ່າອ່ຽງທີ່ດີຂຶ້ນ ສົມທຽບໃນໄລຍະຜ່ານມາ.

7. ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ວຽກງານວັດທະນະທຳ-ສັງຄົມ, ສຶກສາ, ສາທາລະນະສຸກ ແລະ ແຮງງານ ສະຫວັດດີການສັງຄົມ, ໃນນັ້ນ ໄດ້ສຸມໃສ່ການເຝົ້າລະວັງ ແລະ ປ້ອງກັນການແຜ່ລະບາດຂອງພະຍາດຕາມລະດູການ ແຕ່ຫົວທີ, ສຳລັບການແຜ່ລະບາດຂອງພະຍາດໂຄວິດ-19 ເຖິງວ່າອົງການອະນາໄມໂລກ ຈະປະກາດວ່າໂຄວິດ-19 ບໍ່ເປັນໄພຂົ່ມຂູ່ດ້ານສາທາລະນະສຸກແລ້ວກໍຕາມ ແຕ່ພວກເຮົາກໍບໍ່ປະໝາດ, ຍັງສືບຕໍ່ຕິດຕາມເຝົ້າລະວັງຢ່າງໃກ້ຊິດ.

- ໄດ້ສຸມໃສ່ຄົ້ນຄວ້າວິທີແກ້ໄຂບັນຫາຄູອາສາສະໝັກ ແລະ ການຂາດແຄນຄູສອນໃນເຂດຊົນນະບົດ, ຄຽງຄູ່ກັນນັ້ນ ກໍຄົ້ນຄວ້າວິທີແກ້ໄຂສະພາບການປະລະການຮຽນໃນເຂດຊົນນະບົດທີ່ມີທ່າອ່ຽງເພີ່ມຂຶ້ນ ເຊິ່ງຜົນການຄົ້ນຄວ້າທັງໝົດຈະນຳເຂົ້າພິຈາລະນາໃນກອງປະຊຸມລັດຖະບານເປີດກວ້າງ ທີ່ຈະມາເຖິງ, ຈາກນັ້ນຈຶ່ງມອບໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນນຳໄປຈັດຕັ້ງປະຕິບັດ.

- ສຸມໃສ່ສ້າງ ແລະ ພັດທະນາສີມືແຮງງານ ເພື່ອສະໜອງໃຫ້ຕະຫລາດພາຍໃນ ແລະ ຕ່າງປະເທດ, ໃນນັ້ນ ໄດ້ສຸມໃສ່ຄົ້ນຄົ້ນຄວ້າມາດຕະການແກ້ໄຂການຂາດແຄນແຮງງານຢູ່ພາຍໃນ ເນື່ອງຈາກສະພາບເງິນກີບອ່ອນຄ່າເຮັດໃຫ້ແຮງງານລາວຫລັ່ງໄຫຼອອກໄປເຮັດວຽກຢູ່ປະເທດເພື່ອນບ້ານເພີ່ມຂຶ້ນ, ຄຽງຄູ່ກັນນັ້ນ ກໍໄດ້ເອົາໃຈໃສ່ຄຸ້ມຄອງແຮງງານລາວທີ່ໄປອອກແຮງງານຢູ່ຕ່າງປະເທດ. ພ້ອມກັນນັ້ນ ລັດຖະບານ ກໍໄດ້ປັບຄ່າແຮງຂັ້ນຕ່ຳຈາກ 1.100.000 ກີບ/ຄົນ/ເດືອນ ຂຶ້ນເປັນ 1.300.000 ກີບ/ຄົນ/ເດືອນ ແລະ ກຳລັງຄົ້ນຄວ້າປັບຂຶ້ນຕື່ມ ໃນໄຕມາດ.

8. ດ້ານການແກ້ໄຂຜົນກະທົບຈາກສິ່ງແວດລ້ອມ: ໄດ້ເອົາໃຈໃສ່ນຳພາ-ຊີ້ນຳໃນການແກ້ໄຂບັນຫາສິ່ງແວດລ້ອມໂຄງການແຮ່ທົດລອງ ແລະ ໂຄງການລົງທຶນບໍ່ແຮ່ຂະໜາດໃຫຍ່, ພ້ອມກັນນັ້ນ ປີນີ້ເກີດມີສະພາບການຖາງປ່າ ແລະ ຈູດປ່າ ເພື່ອປູກພືດກະສິກຳ ໂດຍສະເພາະປູກເຂົ້າ, ສາລີ, ມັນຕົ້ນ ແລະ ອື່ນໆ ເຊິ່ງໄດ້ມີຜົນກະທົບຕໍ່ສະພາບແວດລ້ອມທາງອາກາດໜັກສົມຄວນ ໂດຍລັດຖະບານໄດ້ມອບໃຫ້ກຳລັງປ້ອງກັນຊາດ ສົມທົບກັບອົງການປົກຄອງທ້ອງຖິ່ນ ໂດຍສະເພາະຂັ້ນເມືອງ, ຂັ້ນບ້ານຮັບຜິດຊອບມອດໄຟ ແລະ ເຝົ້າລະວັງຢ່າງໃກ້ຊິດ, ພ້ອມກັນນັ້ນ ກໍກຳລັງຈະອອກຄຳສັ່ງຂອງນາຍົກລັດຖະມົນຕີເພື່ອເພີ່ມທະວີການຄຸ້ມຄອງປ່າໄມ້ ໃຫ້ລະອຽດເພື່ອບໍ່ໃຫ້ເກີດຂຶ້ນອີກໃນຕໍ່ໜ້າ.

9. ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ສຸມໃສ່ວຽກງານ ປກສ-ປກຊ ທົ່ວປວງຊົນຮອບດ້ານ ອັນໄດ້ເຮັດໃຫ້ປະເທດຊາດພວກເຮົາສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ກໍມີບາດກ້າວທີ່ດີຂຶ້ນ ໂດຍສະເພາະສາມາດມ້າງຄະດີ ແລະ ຈັບກຸມຜູ້ຄ້າລາຍໃຫຍ່, ຜູ້ເສບຢາເສບຕິດໄດ້ຫລາຍກໍລະນີ.

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ



ຕໍ່ຈາກສະບັບກ່ອນ...

- ຈັດສັນທຶນໃຫ້ແກ່ໂຄງການສືບຕໍ່ໃຫ້ສຳເລັດແລະໄດ້ນຳໃຊ້ໂດຍໄວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

- ຈຳກັດໂຄງການລົງທຶນສະເໜີໃໝ່ ຍົກເວັ້ນໂຄງການທີ່ມີຄວາມຈຳເປັນ ແລະ ສຳຄັນ ເປັນຕົ້ນ ໂຄງການຮັບໃຊ້ວຽກງານປ້ອງກັນຊາດ, ການກໍ່ສ້າງຕ້ານຕາຝັ່ງເຈື່ອນຕາມຊາຍແດນ, ແກ້ໄຂໄພພິບັດ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ເຂດກັນດານ, ໃນນັ້ນ ການຈັດສັນທຶນໃຫ້ແກ່ໂຄງການສະເໜີໃໝ່ຕ້ອງຮັບປະກັນການຊຳລະຕາມກົດໝາຍວ່າດ້ວຍການລົງທຶນລັດ ມາດຕາ 19 ແລະ ບົນພື້ນຖານຄວາມອາດສາມາດຊຳລະຂອງງົບປະມານ;

- ໃຫ້ລັດຖະບານລາຍງານຄຳສັ່ງແນະນຳການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ບົດແນະນຳການສ້າງແຜນການລົງທຶນລັດ, ໂຄງປະກອບ ແລະ ເພດານການລົງທຶນລັດ ປີ 2024 ໃຫ້ ສະພາແຫ່ງຊາດ ພິຈາລະນາຮັບຮອງ;

- ແຈ້ງໂຄງປະກອບ ແລະ ເພດານການລົງທຶນລັດທຸກບ້ວງທຶນ ໃຫ້ແກ່ຂະແໜງການສູນກາງ ແລະ ທ້ອງຖິ່ນ ເພື່ອນຳໄປສ້າງແຜນ ແລະ ຈັດສັນທຶນໃຫ້ສຳເລັດໂດຍໄວ ແລະ ນຳສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງ;

- ໂຄງການລົງທຶນປະເພດ V ມູນຄ່າຕ່ຳກວ່າ 20 ຕື້ກີບ ມອບໃຫ້ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຈັດສັນ ແລະ ສະເໜີສະພາປະຊາຊົນແຂວງພິຈາລະນາຮັບຮອງ ແລ້ວຈັດຕັ້ງປະຕິບັດບົນພື້ນຖານໂຄງປະກອບ ແລະ ເພດານທີ່ສະພາແຫ່ງຊາດຮັບຮອງ;

- ພາຍຫຼັງສຳເລັດການຈັດສັນທຶນແລ້ວ ໃຫ້ສົ່ງແຜນການລົງທຶນ ແລະ ບັນຊີໂຄງການລະອຽດໃຫ້ສະພາແຫ່ງຊາດ 20 ວັນ ກ່ອນກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງ ໃຫ້ທັນນຳໄປຈັດຕັ້ງປະຕິບັດໃນໄຕມາດທີ 1 ຂອງສົກປີງົບປະມານ 2024.




*# ຄັດໂດຍ: ທອມສະນິດ*

*❐ ສປປ ລາວ ໄດ້ເອົາໃຈໃສ່ພັດທະນາລະບົບຫໍສະໝຸດໃຫ້ກາຍເປັນທັນສະໄໝ ໂດຍໄດ້ຈັດກິດຈະກຳການສົ່ງເສີມການອ່ານຫຼາຍຮູບແບບໃນຂອບເຂດທົ່ວປະເທດ ເພື່ອປູກຝັງຈິດສຳນຶກໃຫ້ເດັກນ້ອຍ ແລະ ຊາວໜຸ່ມເຫັນໄດ້ຄວາມສຳຄັນ, ມີຄວາມຜູກພັນໃນການອ່ານ ແລະ ສາມາດເຂົ້າເຖິງຫໍສະໝຸດໄດ້ທັງຢູ່ສູນກາງ ແລະ ທ້ອງຖິ່ນ. ປັດຈຸບັນແມ່ນພວມຢູ່ໃນຂັ້ນຕອນເລີ່ມຕົ້ນຂອງການສ້າງຖານຂໍ້ມູນ ແລະ ການພັດທະນາລະບົບ, ໃນຂະນະດຽວກັນການຄົ້ນຫາຂໍ້ມູນ ແລະ ບໍລິການການອ່ານ ໄດ້ໃຫ້ບໍລິການຢູ່ກັບສະຖານທີ່ເທົ່ານັ້ນ ເນື່ອງຈາກວ່າລະບົບອອນລາຍແມ່ນບໍ່ສາມາດເຂົ້າເຖິງຖານຂໍ້ມູນຕາມທີ່ຕ້ອງການໄດ້ເທື່ອ.*

***ໜສພ. ປະເທດລາວ 20/06/2023***

## ສສຊ...

(ຕໍ່ຈາກໜ້າ 1)

(ສສຊ) ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ 6 ເດືອນຕົ້ນປີ ແລະ ສະເໜີທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023.

ພ້ອມນັ້ນ, ຍັງໄດ້ຊັກຖາມເຈາະຈີ້ມກັບທີ່ຕໍ່ບັນຫາຕ່າງໆ ທີ່ໄດ້ຮັບຟັງການຊີ້ແຈງຂອງບັນດາທ່ານລັດຖະມົນຕີຈາກກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ກອງປະຊຸມຍັງໄດ້ຮັບຟັງການລາຍງານ ແລະ ສຸມໃສ່ປະກອບຄຳເຫັນຕໍ່ບົດລາຍງານຂອງທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ທີ່ໄດ້ລາຍງານກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ທ່ານ ພົອ. ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ລາຍງານກ່ຽວກັບຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030)ວິໄສທັດຮອດປີ2035 ຈາກທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່; ລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມຈາກທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ໂອກາດດັ່ງກ່າວ, ຍັງໄດ້ຮັບຟັງການປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ໂດຍແມ່ນທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ປະກອບຄຳເຫັນກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ປະກອບຄຳເຫັນກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ປະກອບຄຳເຫັນກ່ຽວກັບບົດລາຍງານຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030) ວິໄສທັດຮອດປີ 2035; ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ປະກອບຄຳເຫັນກ່ຽວກັບບົດລາຍງານການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ; ພ້ອມນັ້ນ, ບັນດາທ່ານ ສສຊ ກໍໄດ້ປະກອບຄຳເຫັນ ແລະ ຮັບຟັງການຊີ້ແຈງເພີ່ມເຕີມຈາກບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງຕື່ມອີກ.

ໃນຕອນທ້າຍ, ບັນດາທ່ານຕາງໜ້າກອງເລຂານຸການກອງປະຊຸມ ໄດ້ສະເໜີຮ່າງມະຕິກອງປະຊຸມສະພາແຫ່ງຊາດ ໂດຍແມ່ນທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຮັບຜິດຊອບວຽກງານຂົງເຂດເສດຖະກິດເຕັກໂນໂລຊີແລະສິ່ງແວດລ້ອມ ໄດ້ສະເໜີຮ່າງມະຕິວ່າດ້ວຍວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030) ວິໄສທັດຮອດປີ 2035 ແລະ ທ່ານ ນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ຮັບຜິດຊອບວຽກງານຂົງເຂດວັດທະນະທຳ-ສັງຄົມ ວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ ເພື່ອໃຫ້ບັນດາທ່ານ ສສຊ ປະກອບຄຳເຫັນ ແລະ ຮັບຮອງເອົາໃນວາລະຕໍ່ໄປ.

**(ນາງ ປາກາລັກ ພົມມີໄຊ)**

# ກະຊວງການເງິນ ສາມາດປະຕິບັດລາຍຮັບໄດ້ 15.155 ຕື້ກີບ

ຕໍ່ຈາກສະບັບກ່ອນ...

(3) ສືບຕໍ່ເກັບລາຍຮັບຈາກຫົວໜ່ວຍທຸລະກິດຂະໜາດໃຫຍ່ ເປັນຕົ້ນ: ບໍລິສັດໄຟຟ້າຫົງສາ, ນ້ຳເທີນ 2, ລາວຖ່ານຢອນ ບໍ່ແຮ່, ຊີໂນ-ອາກກຣີໂປຕັດ ໃຫ້ເປັນປົກກະຕິ ແລະ ຕິດຕາມການມອບພັນທະຕ່າງໆ ຕາມສັນຍາ ຈຳນວນ 870 ຕື້ກີບ ແລະ 15 ລ້ານໂດລາ;

(4) ເລັ່ງທວງໜີ້ຕ້ອງຮັບຈາກຫົວໜ່ວຍທຸລະກິດຂຸດຄົ້ນເງິນຄຣິບໂຕ ແລະ ສູນຊື້-ຂາຍ ຄຣິບໂຕ ທີ່ຍັງຄ້າງຊຳລະປີ 2022 ຈຳນວນ 7 ຫົວໜ່ວຍ ຈຳນວນ 19,5 ລ້ານໂດລາ, ບໍ່ແຮ່ 94 ລ້ານໂດລາ ຈະເຈລະຈາໃຫ້ບໍລິສັດມອບເນື່ອງຈາກບໍ່ສອດຄ່ອງກັບລະບຽບການ; ຫັນຊັບສິນເປັນທຶນ 159 ຕື້ກີບ ແລະ ປະມານ 7 ລ້ານໂດລາ ໃນກໍລະນີຫາກບໍ່ມອບ ສະເໜີພິຈາລະນາລຶບລ້າງໃບຕາດິນ;

(5) ລົງຊຸກຍູ້ ແລະ ຕິດຕາມກວດກາ ການປະຕິບັດວຽກງານວິຊາສະເພາະ ຢູ່ບັນດາດ່ານພາສີຊາຍແດນ ທີ່ມີຖານລາຍຮັບຫຼາຍ ເປັນຕົ້ນ ດ່ານບໍ່ເຕັນ (ຫຼວງນ້ຳທາ), ດ່ານຂົວມິດຕະພາບ 4 (ບໍ່ແກ້ວ), ດ່ານທ່າບົກ-ທ່ານາແລ້ງ ແລະ ຂົວມິດຕະພາບ 1 (ນະຄອນຫຼວງ);

(6) ສຸມໃສ່ກວດກາການກຳນົດມູນຄ່າແຈ້ງພາສີ ແລະ ແຫຼ່ງກຳເນີດສິນຄ້າ ຂອງບັນດາໝວດສິນຄ້າທີ່ມີຄວາມສ່ຽງ ເປັນຕົ້ນ ສິນຄ້າຟຸມເຟືອຍ (ເຄື່ອງດື່ມປະເພດທາດເຫຼົ້າ), ພາຫະນະປະເພດລົດຫຼູຫຼາ ແລະ ເຄື່ອງເອເລັກໂຕຣນິກ;

(7) ສຸມໃສ່ວຽກງານກວດກາ, ຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ຢູ່ນອກດ່ານພາສີຊາຍແດນ ແລະ ເຂດທີ່ມີຄວາມສ່ຽງຕາມຊາຍແດນ;

(8) ທ້ອນໂຮມຊັບສິນທີ່ໄດ້ຈາກການຍຶດ, ອາຍັດ, ການຕັດສິນຂອງສານເປັນຂອງລັດຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະກະຊວງປ້ອງກັນຄວາມສະຫງົບ ເພື່ອມອບ-ຮັບຊັບສິນ ດັ່ງກ່າວໃຫ້ເປັນຂອງລັດ;

(9) ລົງເກັບກຳຂໍ້ມູນເພີ່ມເຕີມ ຂອງບັນດາເຂື່ອນໄຟຟ້າ, ໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ແລະ ໂຄງການສຳປະທານຕ່າງໆ ເພື່ອເປັນພື້ນຖານສ້າງຂໍ້ມູນຖານລາຍຮັບໃຫ້ລະອຽດຄົບຖ້ວນກັບສະພາບຕົວຈິງ;



(10) ສືບຕໍ່ພັກດັນບັນດານິຕິກຳທີ່ສຳເລັດແລ້ວໃຫ້ສາມາດປະກາດ ແລະ ນຳໃຊ້ໂດຍໄວ ເປັນຕົ້ນ ລັດຖະບັນຍັດວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ, ພາສີຊັບພະຍາກອນ, ຄ່າເຊົ່າ-ຄ່າສຳປະທານ; ລັດຫັນຊັບສິນເປັນທຶນ.

2. ດ້ານລາຍຈ່າຍ

(1) ສືບຕໍ່ຈັດຕັ້ງປະຕິບັດມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ ຕາມດຳລັດສະບັບເລກທີ 205/ນຍ ແລະ ກຳນົດໝາຍໃຊ້ຈ່າຍຂອງລັດສະບັບເລກທີ 0200/ກງ ໃຫ້ເປັນຮູບປະທຳ ຮັບປະກັນລາຍຈ່າຍທີ່ເປັນບູລິມະສິດ ແລະ ຈຳເປັນ ຂອງພັກ-ລັດ ສາມາດເຄື່ອນໄຫວໄດ້ເປັນປົກກະຕິ, ພ້ອມທັງເຂັ້ມງວດການກວດກາເອກະສານກ່ອນຈ່າຍ ເພື່ອໃຫ້ບັນດາຫົວໜ່ວຍງົບປະມານນຳໃຊ້ຖືກເປົ້າໝາຍ;

(2) ສືບຕໍ່ປັບປຸງກົນໄກການຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ ຫັນໄປສູ່ການເບີກຈ່າຍຜ່ານລະບົບທັນສະໄໝ ໂດຍມອບຄວາມຮັບຜິດຊອບໃຫ້ຫົວໜ່ວຍງົບປະມານເປັນເຈົ້າການຫຼາຍຂຶ້ນສ່ວນກະຊວງການເງິນ ຈະຫັນໄປຄຸ້ມຄອງມະຫາພາກ ແລະ ລົງເລິກການກວດກາຫຼັງການຈ່າຍ;

(3) ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ແລະ ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ສະບັບເລກທີ 0477/ກງ;

(4) ປະເມີນການຈັດຕັ້ງປະຕິບັດ ການເຮັດທົດລອງບັນດາຫັນຫົວໜ່ວຍກຸ້ມຕົນເອງທາງດ້ານງົບປະມານ, ພ້ອມທັງສືບຕໍ່ສົມທົບກັບ ກະຊວງພາຍໃນ ເພື່ອປັບປຸງຮ່າງດຳລັດວ່າດ້ວຍການຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງ ແລະ ດຳລັດວ່າດ້ວຍພະລາກອນ ໃຫ້ສຳເລັດຕາມແຜນກຳນົດໄວ້;

(5) ສືບຕໍ່ລົງເກັບກຳຂໍ້ມູນຢູ່ບາງດ່ານສາກົນ ໃນການຄົ້ນຄວ້າໂຄງປະກອບດ້ານງົບປະມານບໍລິຫານດ່ານ ແນໃສ່ຮັບປະກັນມີງົບປະມານພຽງພໍໃນການປັບປຸງສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນການບໍລິຫານຄຸ້ມຄອງດ່ານມີຄວາມຄ່ອງຕົວ;

(6) ສືບຕໍ່ຄົ້ນຄວ້າກົນໄກການເບີກຈ່າຍເງິນເດືອນໃຫ້ສາມາດຈ່າຍໄດ້ ລະຫວ່າງວັນທີ 25 ຫາ 30 ຂອງແຕ່ລະເດືອນ ຂອງບາງຂະແໜງການສູນກາງ ແລະ ທ້ອງຖິ່ນ ທີ່ປະກອບເອກະສານຊັກຊ້າ ໂດຍສົມທົບກັບບັນດາທະນາຄານທຸລະກິດທີ່ມີເງື່ອນໄຂ ເບີກຈ່າຍລ່ວງໜ້າກ່ອນ.

3. ວຽກຫັນເປັນທັນສະໄໝ

ສືບຕໍ່ຈັດຕັ້ງປະຕິບັດວຽກງານການຫັນເປັນທັນສະໄໝ ໃຫ້ເປັນຮູບປະທຳ ແນໃສ່ຮັບປະກັນໃຫ້ການເກັບລາຍຮັບໄດ້ຕາມຄາດໝາຍ ເປັນຕົ້ນ:

(1) ຈັດຕັ້ງປະຕິບັດວຽກງານການຫັນເປັນທັນສະໄໝ ໃຫ້ເປັນຮູບປະທຳ ເຊິ່ງຕ້ອງໄດ້ສືບຕໍ່ປັບປຸງ, ຍົກລະດັບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ, ຍົກລະດັບຖານຂໍ້ມູນຂອງກະຊວງການເງິນ ເພື່ອເຊື່ອມຕໍ່ກັບລະບົບຖານຂໍ້ມູນຂອງບັນດາຂະແໜງການທີ່ກ່ຽວຂ້ອງ;

(2) ຜັນຂະຫຍາຍ ໃນຂອບເຂດທົ່ວປະເທດ ກ່ຽວກັບລະບົບຄຸ້ມຄອງຈັດເກັບພາສີທີ່ດິນ (LTMS) ເຊື່ອມຕໍ່ຫາຖານຂໍ້ມູນທີ່ດິນແຫ່ງຊາດໃໝ່ແບບອອນລາຍ (Real Time) ແລະ ຊຸກຍູ້ການເກັບລາຍຮັບຄ່າທຳນຽມທາງຜ່ານລະບົບ RTMS ເຊື່ອມຕໍ່ຫາຖານຂໍ້ມູນຂອງຂະແໜງໂຍທາທິການ ແລະ ຂົນສົ່ງ;

(3) ຜັນຂະຫຍາຍລະບົບແຈ້ງພາສີປະຕູດຽວແຫ່ງຊາດ (NSWA+) ໄປຫາບັນດາດ່ານພາສີສາກົນທີ່ເຫຼືອ (22 ດ່ານ) ໃນຂອບເຂດທົ່ວປະເທດ, ພ້ອມທັງເຊື່ອມຕໍ່ກັບລະບົບຂອງສະມາຄົມຂົນສົ່ງລະຫວ່າງປະເທດ (LITFA);

(4) ຜັນຂະຫຍາຍລະບົບເກັບຄ່າທຳນຽມ, ຄ່າບໍລິການ (Easy Pass) ຫາບັນດາດ່ານສາກົນທີ່ຍັງເຫຼືອ ໃນຂອບເຂດທົ່ວປະເທດ ແລະ ສືບຕໍ່ລວມສູນການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການທີ່ກ່ຽວຂ້ອງ ຢູ່ດ່ານສາກົນ ແລະ ຢູ່ຈຸດບໍລິການຂອງຫົວໜ່ວຍງົບປະມານ (ຕາມລັດຖະບັນຍັດ ສະບັບເລກທີ 002/ປປທ);

(5) ຂະຫຍາຍລະບົບຈັດເກັບລາຍຮັບພາສີ-ອາກອນ, ຄ່າທຳນຽມ, ຄ່າບໍລິການ ຜ່ານທະນາຄານ (FINLINK) ທີ່ເຊື່ອມຕໍ່ລະບົບຊຳລະສະສາງຂອງທະນາຄານແຫ່ງ ສປປ ລາວ ໃຫ້ສາມາດເຊື່ອມຕໍ່ກັບທະນາຄານທຸລະກິດ ທີ່ຍັງເຫຼືອ;

(6) ຍົກລະດັບຖານຂໍ້ມູນໃຫຍ່ລວມສູນ, ວິເຄາະ-ວິໄຈຂໍ້ມູນ (Lao FIDA) ຂອງກະຊວງການເງິນ ເພື່ອເຊື່ອມຕໍ່ກັບລະບົບຖານຂໍ້ມູນຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ: ລະບົບຖານຂໍ້ມູນ ທີ່ດິນແຫ່ງຊາດໃໝ່ (V7), ຕະຫຼາດແຮງງານ (LMIS), ຄ່າບິນຜ່ານ, ການຂຸດຄົ້ນບໍ່ແຮ່, ການອອກໃບອະນຸຍາດການລົງທຶນ ແລະ ອື່ນໆ;

(7) ປັບປຸງ, ຍົກລະດັບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ ໃຫ້ສາມາດຮອງຮັບການຜັນຂະຫຍາຍການຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍໃນຂອບເຂດທົ່ວປະເທດ.



## ສານຊົມເຊີຍ...

(ຕໍ່ຈາກໜ້າ 1)

ສະມາຊິກໄອພີຢູ ທຸກທົ່ວໜ້າ ແລະ ບັນດາສະມາຊິກສະພາແຫ່ງຊາດ ຊຸດທີ IX ຂອງ ສປປ ລາວ ຢ່າງສຸດອົກສຸດໃຈ.

ສະຫະພັນລັດຖະສະພາສາກົນ ຫຼື IPU ແມ່ນອົງການລັດຖະສະພາລະດັບໂລກ ມີສະມາຊິກທັງໝົດ 178 ປະເທດ ແລະ ມີອົງການຈັດຕັ້ງສາກົນ ເປັນພາຄີ 14 ອົງການ, ໂດຍມີຈຸດປະສົງ ເພື່ອສ້າງເປັນເວທີສົ່ງເສີມການຕິດຕໍ່ພົວພັນ, ການປະສານງານ ແລະ ການແລກປ່ຽນປະສົບການລະຫວ່າງລັດຖະສະພາ ແລະ ສະມາຊິກລັດຖະສະພາບັນດາປະເທດໃນໂລກ; ພິຈາລະນາບັນຫາສຳຄັນຂອງໂລກ, ສົ່ງເສີມການປົກຄອງດ້ວຍລະບຽບກົດໝາຍ, ສົ່ງເສີມບົດບາດຍິງ-ຊາຍ ແລະ ຊາວໜຸ່ມ, ສົ່ງເສີມສັນຕິພາບ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາແບບຍືນຍົງຢູ່ໃນບັນດາປະເທດສະມາຊິກໄອພີຢູ.

ນັບແຕ່ໄດ້ເຂົ້າເປັນສະມາຊິກສະຫະພັນລັດຖະສະພາສາກົນ ໃນວັນທີ 4 ເມສາ 1990 ເປັນຕົ້ນມາ, ສະພາແຫ່ງຊາດລາວ ໄດ້ຕັ້ງໜ້າເຂົ້າຮ່ວມເຄື່ອນໄຫວຢ່າງຫ້າວຫັນ ໃນກອງປະຊຸມໃຫຍ່ ແລະ ກອງປະຊຸມລະດັບຕ່າງໆຂອງສະຫະພັນລັດຖະສະພາສາກົນ ເຊິ່ງເປັນການເຜີຍແຜ່ແນວທາງນະໂຍບາຍຂອງພັກ-ລັດຖະບານ ສປປລາວ ທັງເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງໃນພາກພື້ນ ແລະ ໃນໂລກ.

ເປັນທີ່ຮູ້ກັນດີວ່າ ໃນກອງປະຊຸມສະຫະພັນລັດຖະສະພາສາກົນ ຄັ້ງທີ 129 ແລະ ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດໃນປີ 2018 ໄດ້ມີການຮັບຮອງເອົາມະຕິ ທີ່ໄດ້ກຳນົດເອົາວັນທີ 30 ມິຖຸນາ ຂອງທຸກໆປີ ເປັນວັນລັດຖະສະພາໂລກຂອງທຸກປະເທດສະມາຊິກສະຫະພັນລັດຖະສະພາສາກົນ ເພື່ອລະນຶກ ແລະ ທົບທວນຄືນການປະຕິບັດໜ້າທີ່ ໃນຖານະເປັນອົງການນິຕິບັນຍັດ, ອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນ, ການປະກອບສ່ວນເຂົ້າໃນການສົ່ງເສີມສັນຕິພາບ, ສະຖຽນລະພາບ, ຄວາມໝັ້ນຄົງ ແລະ ການຮ່ວມມືເພື່ອການພັດທະນາແບບຍືນຍົງ ໃນທົ່ວໂລກ.

ການສະເຫຼີມສະຫຼອງວັນລັດຖະສະພາໂລກປີນີ້ ຈັດຂຶ້ນພາຍໃຕ້ຄຳຂວັນລັດຖະສະພາເພື່ອໂລກ-Parliaments for the Planet ເຊິ່ງເປັນຫົວຂໍ້ທີ່ມີຄວາມໝາຍສຳຄັນ ແລະ ສອດຄ່ອງກັບສະພາບການທີ່ໂລກຂອງພວກເຮົາກຳລັງປະເຊີນຢູ່ ເຊັ່ນ: ບັນຫາໂຣກລະບາດ, ໄພພິບັດທາງທຳມະຊາດ, ໄພອຶດຫິວ, ໄພເງິນເຟີ້, ບັນຫາພະລັງງານ, ການຂວ້ຳບາດທາງດ້ານເສດຖະກິດ ແລະ ຄວາມຂັດແຍ່ງດ້ານການທະຫານ ໃນຫຼາຍພາກພື້ນຂອງໂລກ, ອັນໄດ້ສົ່ງຜົນກະທົບທີ່ໜັກໜ່ວງຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ທັງຢູ່ໃນບັນດາປະເທດທີ່ພັດທະນາ ແລະ ກຳລັງພັດທະນາ ລວມທັງ ສປປ ລາວ ຢ່າງຫຼີກລ່ຽງບໍ່ໄດ້. ສະມາຊິກລັດຖະສະພາ ແລະ ໃນນາມຕົວແທນຂອງປະຊາຊົນລາວບັນດາເຜົ່າ ໃນຖານະທີ່ເປັນສະມາຊິກ ພ້ອມແລ້ວທີ່ຈະສືບຕໍ່ຮ່ວມມື ແລະ ສະໜັບສະໜູນແຜນດຳເນີນງານຕ່າງໆຂອງສະຫະພັນລັດຖະສະພາສາກົນ.

ທ້າຍນີ້, ຂ້າພະເຈົ້າ ຂໍອວຍພອນແດ່ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ບັນດາແຂກຜູ້ມີກຽດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານ ອັນມີກຽດຂອງບັນດາທ່ານ.

## ຄຳເຫັນສັງລວມ...

(ຕໍ່ຈາກໜ້າ 1)

ໄດ້ເກີນຄາດໝາຍ ຖ້າທຽບໃສ່ໄລຍະກ່ອນບໍ່ທັນມີວາລະແຫ່ງຊາດ ເປັນຕົ້ນ ການຜະລິດກະສິກຳ ເພື່ອຊົມໃຊ້ພາຍໃນ ແລະ ເປັນສິນຄ້າສົ່ງອອກ; ການສ້າງຄວາມເຂັ້ມແຂງໃຫ້ແກ່ການເກັບລາຍຮັບ, ການປະຢັດ ແລະ ຕ້ານການຟຸມເຟືອຍ; ການຄຸ້ມຄອງລັດດ້ວຍກົດໝາຍ ແລະ ດ້ານອື່ນໆ. ແຕ່ເຖິງແນວໃດກໍຕາມ ເມື່ອອີງໃສ່ສະພາບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາໃນໄລຍະໃໝ່, ສະເໜີໃຫ້ລັດຖະບານ ເພີ່ມທະວີການນຳພາການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ມີໝາກຜົນສູງຂຶ້ນຕື່ມ ໂດຍສະເພາະການປະຕິບັດ 3 ຫຼັກການຂອງວາລະແຫ່ງຊາດ ໃຫ້ເປັນຮູບປະທຳ ແລະ ຜັນຂະຫຍາຍໃນຂົງເຂດວຽກງານປົກກະຕິຂອງຂະແໜງການຕ່າງໆ ແນໃສ່ເຮັດໃຫ້ການສະຫຼຸບຕີລາຄາຜົນສຳເລັດ ໃນທ້າຍປີ 2023 ສາມາດເຫັນໄດ້ຜົນງານ, ຜົນສຳເລັດ ເຊິ່ງຈະເປັນກຳລັງແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາໃນຕໍ່ໜ້າ.

2. ຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ການເກັບລາຍຮັບງົບປະມານ ເຫັນວ່າການເກັບລາຍຮັບ ເລີ່ມແຕ່ປີ 2021 ມາຮອດປັດຈຸບັນ ສາມາດບັນລຸໄດ້ເກີນແຜນການ; ລັດຖະບານ ໄດ້ມີຄວາມພະຍາຍາມນຳໃຊ້ທຸກມາດຕະການເຂົ້າໃນການເກັບລາຍຮັບ ໂດຍສະເພາະການຫັນເປັນທັນສະໄໝ, ການປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນ ແລະ ອື່ນໆ. ແຕ່ເຖິງແນວໃດກໍຕາມເມື່ອອີງໃສ່ທ່າແຮງບົ່ມຊ້ອນທີ່ເຮົາມີ ກໍຍັງເຫັນໄດ້ວ່າຍັງມີບາງດ້ານທີ່ລັດຖະບານຈະຕ້ອງໄດ້ສືບຕໍ່ເພີ່ມທະວີຄວາມເອົາໃຈໃສ່ຕື່ມ ເປັນຕົ້ນການຊຸກຍູ້ການຜະລິດເປັນສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ, ການຕ້ານການຮົ່ວໄຫຼ, ການເກັບກຳລາຍຮັບໃຫ້ໄດ້ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ການຄຸ້ມຄອງລາຍຈ່າຍ, ການປະຢັດມັດທະຍັດລາຍຈ່າຍງົບປະມານຂອງລັດອື່ນໆ, ສືບຕໍ່ຫັນເປັນທັນສະໄໝໃຫ້ແຂງແຮງໃນທົ່ວລະບົບການເງິນຕື່ມ;

3. ໃນວຽກງານຈຸດສຸມສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຜ່ານການຈັດຕັ້ງປະຕິບັດ ມີຜົນສຳເລັດເປັນກ້າວໆ ເປັນຕົ້ນ ການນຳໃຊ້ລົດໄຟຟ້າ, ການປະຢັດລາຍຈ່າຍບໍລິຫານ ແລະ ອື່ນໆ ເຖິງແນວໃດກໍຕາມ ຕໍ່ໜ້ານີ້ໃຫ້ລັດຖະບານເພີ່ມທະວີການໂຄສະນາເຜີຍແຜ່ນະໂຍບາຍປະຢັດ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈຄວາມສຳຄັນຂອງການປະຢັດ ໃນໄລຍະທີ່ປະເທດເຮົາ ພວມປະສົບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ, ປຸກລະດົມທົ່ວສັງຄົມ ໃຫ້ມີນ້ຳໃຈປະຢັດລາຍຈ່າຍໃນການດຳລົງຊີວິດ, ການຈັດງານປະເພນີຕ່າງໆບົນພື້ນຖານການປະຢັດມັດທະຍັດ.

4. ການເຮັດທົດລອງແຮ່ທາດ ກໍເປັນນະໂຍບາຍໜຶ່ງ, ນະໂຍບາຍເສດຖະກິດໜຶ່ງ, ຜ່ານການຈັດຕັ້ງປະຕິບັດຕົວຈິງໃນໄລຍະ 2 ປີກວ່າຜ່ານມາ ກໍໄດ້ຮັບຄຳຄິດຄຳເຫັນຕ່າງໆຂອງປະຊາຊົນ ຈາກທ້ອງຖິ່ນຕ່າງໆທີ່ມີການຈັດຕັ້ງປະຕິບັດເຮັດທົດລອງແຮ່ທາດ ເປັນຕົ້ນ ບໍ່ຢາກໃຫ້ສືບຕໍ່ໂຄງການຂຸດຄົ້ນແຮ່ທົດລອງ, ຄວນຮັກສາແຮ່ທາດທີ່ມີຄຸນຄ່າ, ຫາຍາກ, ມີລາຄາສູງ, ຄວນກຳນົດເຂດຮັກສາໄວ້ໃນອະນາຄົດໃຫ້ລູກຫຼານຄົນລຸ້ນຕໍ່ໄປ; ການຄຸ້ມຄອງປະລິມານ ແລະ ຄຸນນະພາບຂອງແຮ່ທາດ ເຊິ່ງຈະເປັນສິ່ງຕັດສິນຜົນປະໂຫຍດ ກໍຄືສ່ວນແບ່ງຂອງລັດເຮົາ ກໍຍັງບໍ່ທັນຮັບປະກັນ, ບັນຫາຮັບປະກັນສິ່ງແວດລ້ອມ, ພໍ່ແມ່ປະຊາຊົນມີຄວາມເປັນຫ່ວງຫຼາຍຕໍ່ຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າ ໃນຕໍ່ໜ້າໃຫ້ລັດຖະບານເອົາໃຈໃສ່ວຽກງານດັ່ງກ່າວຕື່ມອີກ ແລະ ກໍໃຫ້ກະກຽມສະຫຼຸບຕີລາຄາຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ;

5. ການສ້າງສະຖຽນລະພາບດ້ານເງິນຕາ ເຊິ່ງເປັນວຽກງານຈຸດສຸມໜຶ່ງຂອງວາລະແຫ່ງຊາດ ແລະ ປະສິດທິຜົນການຈັດຕັ້ງປະຕິບັດ ຍັງບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ ເປັນວຽກງານທີ່ພໍ່ແມ່ປະຊາຊົນ ມີຄວາມເປັນຫ່ວງເປັນໄຍຫຼາຍ; ເປັນວຽກງານທີ່ຕິດພັນກັບລາຄາສິນຄ້າ, ຄ່າຄອງຊີບ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ໃນວຽກງານຈຸດສຸມການສ້າງສະຖຽນລະພາບດ້ານເງິນຕາ ໃຫ້ລັດຖະບານ ມີນະໂຍບາຍໄລຍະສັ້ນ-ກາງ-ຍາວ, ນຳໃຊ້ມາດຕະການທາງດ້ານກົດໝາຍທີ່ເດັດຂາດ, ເຂັ້ມງວດ ມາດຕະການແຕ່ເບົາຫາໜັກ ໃນການແກ້ໄຂບັນຫາດັ່ງກ່າວ ໃຫ້ໄດ້ຮັບຜົນສຳເລັດຫັນຈາກສັງຄົມຜູ້ບໍລິໂພກໄປສູ່ສັງຄົມຜູ້ຜະລິດ, ຫຼຸດຜ່ອນການນຳເຂົ້າ, ເຮັດໃຫ້ເງິນກີບແຂງຄ່າ, ອັດຕາແລກປ່ຽນມີຄວາມໝັ້ນທ່ຽງ.

6. ເອົາໃຈໃສ່ຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີຄວາມເຂັ້ມງວດ, ສຸມໃສ່ການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດຕິດພັນກັບການແກ້ໄຂບັນຫາສັງຄົມ, ບັນຫາປົກປັກຮັກສາສິ່ງແວດລ້ອມ ແລະ ການບໍລິຫານລັດ ເປັນຕົ້ນ ການກຳນົດໂຄຕ້າພະນັກງານ ຕ້ອງຮັບປະກັນການກໍ່ສ້າງພະນັກງານສືບທອດຂອງລັດໃນອະນາຄົດ.

## ທະນາຄານ...

(ຕໍ່ຈາກໜ້າ 1)

ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕໍ່ກັບສະພາບເສດຖະກິດການເງິນ-ເງິນຕາພາຍໃນ, ພາກພື້ນ ແລະ ສາກົນ ໃນໄລຍະ 6 ເດືອນຕົ້ນປີ ທຫລ ໄດ້ດຳເນີນນະໂຍບາຍເງິນຕາ ໃນທິດທາງທີ່ຮັດກຸມ ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ-ດ້ານລາຄາ ແລະ ປະກອບສ່ວນຊ່ວຍຊຸກຍູ້ການຟື້ນຕົວ ແລະ ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານເສດຖະກິດ ດັ່ງນີ້:

- ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຈາກ 6,5% ຕໍ່ປີ ເປັນ 7,5% ຕໍ່ປີ;
- ໄດ້ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈາກ 5% ມາເປັນ 5,5% ສຳລັບສະກຸນເງິນກີບ ແລະ ຈາກ 5% ມາເປັນ 8% ສຳລັບສະກຸນເງິນຕາຕ່າງປະເທດ;
- ໄດ້ອອກຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນ ໃນວົງເງິນລວມທັງໝົດ 5.000 ຕື້ກີບ. ໃນນີ້, ໄດ້ຈຳໜ່າຍພັນທະບັດ ອາຍຸ 6 ເດືອນ ໃນອັດຕາ 15% ແລະ 20% ຕໍ່ປີ ໃຫ້ມວນຊົນ ຈຳນວນ 3 ຄັ້ງ ໃນວົງເງິນທັງໝົດ 4.000 ຕື້ກີບ; ຈຳໜ່າຍພັນທະບັດ ທຫລ ອາຍຸ 3 ເດືອນ ແລະ 6 ເດືອນ ຜ່ານຕະຫຼາດເປີດ (ກົນໄກປະມູນມູນຄ່າ) ໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ຈຳນວນ 1.000 ຕື້ກີບ;
- ໄດ້ສືບຕໍ່ຈັດຕັ້ງປະຕິບັດພັນທະບັດຄັງເງິນ ຢູ່ ທຫລ ເພື່ອຈຳໜ່າຍໃຫ້ທະນາຄານທຸລະກິດ ແລະ ກອງທຶນຕ່າງໆ ໃນໄລຍະ 6 ເດືອນຕົ້ນປີ 2023 ປະມູນໄດ້ທັງໝົດ 624,4 ຕື້ກີບ;
- ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍໄດ້ປັບກອບອັດຕາແລກປ່ຽນທຽບກັບອັດຕາອ້າງອີງປະຈຳວັນຂອງ ທຫລ 2 ຄັ້ງ (ຈາກ +1,5% ມາເປັນ 4,5% ໃນເດືອນກຸມພາ ແລະ ມາເປັນ +7,5% ໃນວັນທີ 19 ມິຖຸນາ 2023) ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ກຳນົດອັດຕາແລກປ່ຽນຂອງຕົນ ແນໃສ່ເຮັດໃຫ້ອັດຕາແລກປ່ຽນເໝັງຕີງສອດຄ່ອງກັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ;
- ໄດ້ດຳເນີນມາດຕະການໃນການເກັບຊື້ເງິນຕາຕ່າງປະເທດ ເພື່ອເພີ່ມຄັງສຳຮອງເງິນຕາຕ່າງປະເທດໃຫ້ບັນລຸໄດ້ຕາມຄາດໝາຍ 5 ປີ ທີ່ໄດ້ກຳນົດໄວ້ໃນມະຕິສະພາແຫ່ງຊາດ ພ້ອມທັງໄດ້ປັບປຸງໂຄງປະກອບຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບສະພາບການຄ້າຕ່າງປະເທດຂອງ ສປປ ລາວ;
- ໄດ້ສືບຕໍ່ປະກອບສ່ວນແກ້ໄຂບັນຫາແຫຼ່ງທຶນຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດ ທັງໝົດຈຳນວນ 1.816,2 ຕື້ກີບ;
- ລະບົບທະນາຄານ ໄດ້ຄົ້ນຄວ້າຈັດສັນແຫຼ່ງທຶນເພື່ອດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ ໃນໄລຍະ 6 ເດືອນຕົ້ນປີ 2023 ທັງໝົດຈຳນວນ 264,08 ລ້ານໂດລາທຽບເທົ່າ ເພື່ອຮັບປະກັນການສະໜອງເງິນຕາຕ່າງປະເທດ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟ.

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ:

- ໄດ້ຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ອອກເປັນນິຕິກຳໃຕ້ກົດໝາຍ ໂດຍສຳເລັດການຮັບຮອງແລ້ວ 10 ສະບັບ ຈາກທັງໝົດ 23 ສະບັບ;
- ໄດ້ສຳເລັດການສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ(ສະບັບປັບປຸງ) ແລະ ກະກຽມສ້າງຕັ້ງຫ້ອງການຜູ້ຕາງໜ້າ ທຫລ ຢູ່ເຂດເສດຖະກິດພິເສດ ດອກງີ້ວຄຳ ແລະ ເຂດພິເສດບໍ່ເຕ່ນແດນງາມ;
- ໄດ້ສຳເລັດການອອກແຈ້ງການຢຸດຕິ ການອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດແລ້ວທັງໝົດແລ້ວ ແລະ ໄດ້ປະສານສົມທົບກັບກະຊວງອຸດສະຫະກຳ ແລະ ການຄ້າ ແລະ ກະຊວງການເງິນ ລຶບລ້າງໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນຕາມລະບຽບກົດໝາຍ, ພ້ອມທັງສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໂດຍສຳເລັດພື້ນຖານການລົງຕິດຕາມ-ກວດກາຄືນການປິດປ້າຍຂອງບັນດາຮ້ານແລກປ່ຽນເງິນຕາຕົວແທນທີ່ໄດ້ປິດໄປແລ້ວສົມທົບກັບຂະແໜງສື່ມວນຊົນ ເພື່ອຊ່ວຍເປັນກະບອກສຽງໃນການໂຄສະນາປະຊາສຳພັນຂອງການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ ແບບຜິດກົດໝາຍ;
- ໄດ້ຊຸກຍູ້ໃຫ້ທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາຂອງຕົນ ເພື່ອມາທົດແທນບັນດາຮ້ານແລກປ່ຽນຕົວແທນທີ່ໄດ້ຖືກຢຸດຕິເຊິ່ງມາຮອດປະຈຸບັນມີທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຂະ

ອ່ານຕໍ່ສະບັບໜ້າ

# ກອງປະຊຸມຮ່ວມລະຫວ່າງສະພາກັບອົງການປົກຄອງແຂວງ




(ສພຊ) ໃນວັນທີ 22 ມິຖຸນາ 2023 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຊຽງຂວາງ ໄດ້ເປີດກອງປະຊຸມຮ່ວມລະຫວ່າງສະພາປະຊາຊົນແຂວງກັບອົງການປົກຄອງແຂວງຊຽງຂວາງ ເພື່ອປຶກສາຫາລື ແລະ ເອກະພາບກ່ຽວກັບເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ບຸນຈັນ ສີວົງພັນ ເຈົ້າແຂວງ ແຂວງຊຽງຂວາງ ແລະ ທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມ ມີບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ, ອົງການຈັດຕັ້ງມະຫາຊົນ ແລະ ພະນັກງານຂອງສະພາປະຊາຊົນແຂວງ.

ໃນກອງປະຊຸມໄດ້ປຶກສາຫາລື, ເອກະພາບກັນຕໍ່ບັນດາຫົວຂໍ້ທີ່ຈະນຳເຂົ້າພິຈາລະນາ, ຄົ້ນຄວ້າ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນແມ່ນບົດລາຍງານວຽກງານທີ່ພົ້ນເດັ່ນຂອງທ່ານເຈົ້າແຂວງໂດຍສັງເຂບ, ບົດລາຍງານຂອງພະແນກແຜນການ ແລະ ການລົງທຶນ, ພະແນກການເງິນ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແລະ ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດສອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຂອງແຂວງ ແລະ ບັນດາພະແນກການກ່ຽວຂ້ອງຈຳນວນໜຶ່ງ ຊີ້ແຈງຕາມຄຳຖາມເຈາະຈົ້ມ, ບົດລາຍງານຂອງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນ ແລະ ບົດລາຍງານຂອງສະພາປະຊາຊົນແຂວງໃນການຈັດຕັ້ງປະຕິບັດວຽກງານໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການທ້າຍປີ 2023; ພ້ອມກັນນັ້ນ ຜູ້ແທນກອງປະຊຸມຍັງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຍົກບັນຫາຂຶ້ນເພື່ອສົນທະນາກ່ຽວກັບບັນດາຫົວຂໍ້ຕ່າງໆຢ່າງກົງໄປກົງມາ ແລະ ເລິກເຊິ່ງ ເພື່ອເຮັດໃຫ້ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ມີເນື້ອໃນຄົບຖ້ວນ, ສອດຄ່ອງຕາມກົດໝາຍ.

ໃນຕອນທ້າຍ, ຄະນະປະທານຍັງໄດ້ໂອ້ລົມ ແລະ ມີຄຳຄິດເຫັນຕໍ່ກອງປະຊຸມ ໂດຍເນັ້ນໃຫ້ທຸກຂະແໜງການທີ່ກ່ຽວຂ້ອງຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນດ້ວຍຄວາມຮັບຜິດຊອບສູງ ພ້ອມທັງກະກຽມບົດງານລາຍຂອງຕົນໃຫ້ທ່ວງທັນກັບເວລາ, ລະອຽດຖີ່ຖ້ວນ ກ່ອນນຳເຂົ້າຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງໃນຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

**(ບຸນສີ ສິດທິເດດ)**

# ຍົກສູງຂີດຄວາມສາມາດ ໃຫ້ພະນັກງານ ລັດຖະກອນພາຍ ໃນສະພາປະຊາຊົນແຂວງ



(ສພຊ) ໃນລະຫວ່າງວັນທີ 28-29 ມິຖຸນາ 2023 ຢູ່ທີ່ຫ້ອງປະຊຸມຂອງເມືອງຫົງສາ ແຂວງໄຊຍະບູລີ ໄດ້ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງ ໃນການຍົກສູງທັກສະການຂີດຂຽນເອກະສານ ແລະ ການກະກຽມວຽກງານຮອບດ້ານຮັບໃຊ້ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໂດຍການເປັນປະທານຂອງທ່ານ ນາງ ວິລະພອນ ທອງພິມ ຮອງປະທານສະພາປະຊາຊົນແຂວງໄຊຍະບູລີ; ເຂົ້າຮ່ວມເປັນວິທະຍາກອນທີ່ມາຈາກຂັ້ນແຂວງໂດຍທ່ານ ນາງ ດາວິນ ລາດສະກິດ ຮອງເລຂາພັກເມືອງ ເມືອງຫົງສາ, ມີບັນດາສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຫົງສາ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງການ ພ້ອມດ້ວຍພະນັກງານ-ວິຊາການພາຍໃນສະພາປະຊາຊົນແຂວງ ແລະ ຜູ້ຊ່ວຍວຽກ 11 ເມືອງທົ່ວແຂວງໄຊຍະບູລີ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດຝຶກອົບຮົມຄັ້ງນີ້ ກໍເພື່ອສ້າງຄວາມເຂັ້ມແຂງຍົກສູງທັກສະການຂີດຂຽນເອກະສານ ແລະ ການກະກຽມຮອບດ້ານໃນການຮັບໃຊ້ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແລະ ກອງປະຊຸມສະພາປະຊາຊົນແຂວງ ພ້ອມທັງເປັນການຍົກລະດັບຄວາມຮູ້, ຄວາມສາມາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນສາມພາລະບົດບາດຕົ້ນຕໍຂອງສະພາປະຊາຊົນແຂວງ ທີ່ໄດ້ກຳນົດໄວ້ຄື: ດ້ານນິຕິບັນຍັດ ແມ່ນສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ດ້ານການຕົກລົງບັນຫາພື້ນຖານສຳຄັນຂອງແຂວງເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ແລະ ດ້ານການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມພາຍໃນແຂວງ.

ໃນກອງປະຊຸມແມ່ນໄດ້ຮັບຟັງການນຳສະເໜີ ແລະ ບັນຍາຍເນື້ອໃນເອກະສານຈາກວິທະຍາກອນທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການຕົວຈິງ ປະກອບມີ 4 ຫົວຂໍ້ ຄື: ບົດຮຽນກ່ຽວກັບການສ້າງຮ່າງບົດສະຫຼຸບ, ແຜນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ແລະ ການສ້າງບົດລາຍງານ; ບົດຮຽນກ່ຽວກັບການສ້າງຮ່າງ ມະຕິກອງປະຊຸມສະພາປະຊາຊົນແຂວງ; ບົດຮຽນກ່ຽວກັບການກະກຽມກອງປະຊຸມສະພາປະຊາຊົນແຂວງ; ບົດຮຽນກ່ຽວກັບການສັງລວມ, ວິເຄາະ, ວິໄຈ ຄຳສະເໜີຂອງຜູ້ສິດເລືອກຕັ້ງ ແລະ ແບ່ງກຸ່ມຄົ້ນຄ້ວາຕາມຫົວຂໍ້ບົດຮຽນກ່ຽວກັບການກະກຽມກອງປະຊຸມສະພາປະຊາຊົນແຂວງ ແລະ ການສັງລວມ, ວິເຄາະ, ວິໄຈຄຳສະເໜີຂອງຜູ້ສິດເລືອກຕັ້ງ; ຈາກນັ້ນ, ສຳມະນາກອນ ກໍໄດ້ຄົ້ນຄ້ວາແລກປ່ຽນບົດຮຽນ ພ້ອມທັງປະກອບຄຳຄິດ-ຄຳເຫັນເຊິ່ງກັນ ແລະ ກັນ ໃນແຕ່ລະຫົວຂໍ້ທີ່ນຳມາສະເໜີ ເຮັດໃຫ້ມີເນື້ອໃນເລິກເຊິ່ງ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ ໃຫ້ເກີດດອກອອກຜົນ ເຮັດໃຫ້ແຜນການຈັດຝຶກອົບຮົມໃນຄັ້ງນີ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ການຝຶກອົບຮົມໃນຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນໂດຍ: ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ (STEPS).

**(ອິນທິ ຊຽວສີຟ້າ)**

# ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ກົດໝາຍ



(ສພຊ) ຕົ້ນເດືອນມິຖຸນາ 2023 ທ່ານ ບຸນທາມ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ກອງບັນຊາການທະຫານນະຄອນຫຼວງວຽງຈັນ ໂດຍການຕ້ອນຮັບຂອງທ່ານ ພົວ. ໄພວັນ ຈັນທະພົມມາ ຫົວໜ້າການເມືອງກອງບັນຊາການທະຫານນະຄອນຫຼວງວຽງຈັນ, ມີບັນດາທ່ານນາຍ ແລະ ພົນທະຫານ ເຂົ້າຮ່ວມ.

ການເຄື່ອນໄຫວຄັ້ງນີ້ ກໍເພື່ອເປັນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແລະ ເປັນການປະສານສົມທົບໃຫ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະສົບຜົນສຳເລັດຕາມແຜນປີທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະຕົ້ນປີຜ່ານມາ ໄດ້ມີການກວດກາການຍົກຍ້າຍເຂົ້າອອກຂອງພະນັກງານ ແລະ ຜູ້ສະໝັກເປັນທະຫານພັນທະ, ພິຈາລະນາອອກຄຳສັ່ງກັກຕົວພາງຕາມການສະເໜີຂອງພະແນກປ້ອງກັນພາຍໃນ ແລະ ໄດ້ຈັດຕັ້ງເຜີຍແຜ່ກົດໝາຍເປັນຕົ້ນແມ່ນກົດໝາຍນາຍທະຫານ, ກົດໝາຍຢາເສບຕິດ ແລະ ກົດໝາຍຄອບຄົວ ໃຫ້ບັນດາກົມກອງໄດ້ທັງໝົດ 4 ກົມກອງ. ນອກນັ້ນ, ໄລຍະຕົ້ນປີຜ່ານມາ ວຽກງານອົງການຍຸຕິທຳໄດ້ຮັບຄຳຮ້ອງທັງໝົດ 17 ເລື່ອງ,ອອກຄຳສັ່ງເປີດການສືບສວນ 6 ເລື່ອງ ແລະ ໄດ້ສະຫຼຸບສົ່ງສຳນວນຄະດີໃຫ້ອົງການໄອຍະການທະຫານພາກກາງ ສົ່ງຟ້ອງສານທະຫານ ພາກກາງຕັດສິນ 3 ເລື່ອງ; ຄຽງຄູ່ກັບຜົນສຳເລັດນັ້ນ ເຫັນວ່າຍັງມີບາງບັນຫາທີ່ຍັງເປັນຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດຕາມແຜນການປີທີ່ວາງໄວ້.

ໂອກາດດັ່ງກ່າວ, ຄະນະເຄື່ອນໄຫວເຮັດວຽກໄດ້ມີການແລກປ່ຽນຄຳຄິດເຫັນຕໍ່ການລາຍງານ ແລະ ໃນບາງວຽກງານທີ່ເປັນທາງສຽງທາງສັງຄົມ ເພື່ອໃຫ້ທາງກອງບັນຊາການທະຫານ ນວ ໄດ້ມີຄຳເຫັນຊີ້ແຈງເພີ່ມຕື່ມ ເປັນຕົ້ນແມ່ນຄຳສະເໜີໃນບັ້ນລົງພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ.

ຕອນທ້າຍກອງປະຊຸມ, ທ່ານ ບຸນທາມ ພຸດທະວົງສາ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາທ່ານນາຍ ແລະ ພົນທະຫານທຸກກົມກອງ ທີ່ໄດ້ເອົາໃຈໃສ່ຕັ້ງໜ້າປະຕິບັດໜ້າທີ່ດ້ວຍຄວາມຫ້າວຫັນຈົນໄດ້ຮັບຜົນສຳເລັດຫຼາຍດ້ານໃນໄລຍະຜ່ານມາ ແລະ ຄຽງຄູ່ກັນນັ້ນ ກໍໄດ້ມີທິດຊີ້ນຳ ໃຫ້ສືບຕໍ່ສຶກສາອົບຮົມການເມືອງແນວຄິດ, ບຳລຸງສ້າງ, ປັບປຸງຂີດຄວາມສາມາດທາງດ້ານເຕັກນິກວິຊາສະເພາະ ດ້ານບຸກຄະລາກອນ ໃຫ້ທົ່ວກອງບັນຊາການ ແລະ ສອດຄ່ອງກັບສະພາບການ ໂດຍສະເພາະ ຮາກຖານປ້ອງການຄວາມສະຫງົບ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໃຫ້ປະສານສົມທົບກັບອົງການປົກຄອງ ນວ ແກ້ໄຂຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ສ້າງພູມຄຸ້ມກັນໃຫ້ຫຼາຍກວ່າການປາບປາມ ໂດຍການໂຄສະນາ, ເຊື່ອມຊຶມກົດໝາຍ, ນິຕິກົດໝາຍ, ລະບຽບການ ແລະ ໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍທີ່ກຳນົດໄວ້ໃນແຜນປີ ໃຫ້ສຳເລັດ ແລະ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON



# ສສຊ ເຂດ 18 ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານ

ທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໄດ້ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ເຊິ່ງມີເນື້ອໃນສຳຄັນດັ່ງນີ້: ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຜ່ານການປະຕິບັດຕາມພາລະບົດບາດການຕິດຕາມການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ໃນໄລຍະ 6 ເດືອນຕົ້ນປີ ຍັງມີສິ່ງຄົງຄ້າງຫຍໍ້ທໍ້ຈຳນວນໜຶ່ງ ສະເໜີສ່ອງແສງໃຫ້ລັດຖະບານໄດ້ຮັບຊາບເພື່ອສືບຕໍ່ຈັດຕັ້ງປະຕິບັດ.

ຈຸດທີໜຶ່ງ ໃນ 6 ເດືອນຕົ້ນປີ 2023 ມີສະພາບການບຸກລຸກຖາງປ່າຈູດປ່າ ຫຼາຍກວ່າທຸກປີທີ່ຜ່ານມາ ໂດຍສະເພາະແມ່ນ 3 ປະເພດປ່າ ເຂດເລືອກຕັ້ງທີ 18 ມີ 98 ບ້ານ, ມີ 56 ບ້ານໄປບຸກລຸກປ່າ ມີ 1.202 ຄອບຄົວ ປ່າຖືກທຳລາຍ 3608,11 ເຮັກຕາ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຕີລາຄາວ່າ ຍ້ອນບັນຫາເງິນເຟີ້ ຄ່າເງິນກີບອ່ອນຄ່າ ການຄຸ້ມຄອງລາຄາສິນຄ້າອຸປະໂພກ ບໍ່ທັນດີ ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າຈຶ່ງຫັນເຫໄປຊອກຫາແຫຼ່ງລາຍຮັບ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າດ້ວຍການຖາງປ່າຈູດປ່າ ປູກມັນຕົ້ນ ເຊິ່ງມີຜົນຕອບແທນພໍແກ້ໄຂໄດ້.

ຈຸດທີສອງ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ເຫັນດີເປັນເອກະພາບວ່າ ການເຮັດທົດລອງຂຸດຄົ້ນແຮ່ທາດ ສາມາດສ້າງລາຍຮັບເຂົ້າງົບປະມານຫຼາຍສົມຄວນ ແຕ່ຜ່ານການລົງຕິດຕາມກວດກາຕົວຈິງ ສັງເກດເຫັນວ່າ ການຄຸ້ມຄອງການຂຸດຄົ້ນແຮ່ທາດຍັງບໍ່ທັນດີ ທັງສຳຫຼວດທັງຂຸດຄົ້ນໄປພ້ອມ, ຫຼາຍ



ບໍລິສັດບໍ່ທັນມີບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ, ເຕັກນິກ ແລະ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ສ້າງຄວາມຫຍຸ້ງຍາກໃນການຕິດຕາມຄຸ້ມຄອງ.

- ບັນຫາກວດກາ ຄຸນນະພາບ ຄວາມເຂັ້ມຂຸ້ນຂອງແຮ່ ບໍ່ມີພະນັກງານຂອງລັດ ມີແຕ່ຝ່າຍບໍລິສັດ, ຄວາມເຂັ້ມຂຸ້ນ 61,9% ລົງມາ 30 ໂດລາ/ໂຕນ 62% ຂຶ້ນໄປ 40 ໂດລາຕໍ່ໂຕນ.

- ຊິງຊັ່ງນ້ຳໜັກ ແລະ ຜູ້ຄວບຄຸມຊິງຊັ່ງບໍ່ແມ່ນຂອງລັດ ບໍ່ມີພະນັກງານລັດ, ເປັນຂອງບໍລິສັດ ເຮັດໃຫ້ເສຍບໍລິມາດ ແລະ ນ້ຳໜັກເກີນເອລາຂົນສົ່ງ. ສຳລັບລົດ 10 ລໍ້ ຕາມຂໍ້ກຳນົດຂອງກະຊວງໂຍທາທິການຂົນສົ່ງໃຫ້ບັນທຸກບໍ່ເກີນ 23,2 ໂຕນ ແຕ່ຜ່ານການຕິດຕາມກວດກາຕົວຈິງ ບັນທຸກ 56,7 ໂຕນ ເກີນ 30 ກວ່າໂຕນ ເຮັດໃຫ້ເສັ້ນທາງເປ່ເພເສຍຫາຍ.

- ບໍລິສັດ ຂຸດຄົ້ນອອກຊື່ບໍລິສັດລາວ ແຕ່ຜູ້ຂຸດຄົ້ນຄວ້າຕົວຈິງຢູ່ພາກສະໜາມ ສ່ວນຫຼາຍແມ່ນຕ່າງປະເທດ ເປັນຮຸ້ນສ່ວນ ຫຼືວ່າບໍ່ຈະແຈ້ງ.

- ການສ້າງແລວທາງເຂົ້າໄປຫາເຂດຂຸດຄົ້ນ ແລະ ບໍລິເວນຂຸດຄົ້ນ ພາໃຫ້ເກີດຜົນເສຍຫາຍຕໍ່ປ່າໄມ້ ສະເພາະເຂດລ້ອງແຈ້ງມີຜົນກະທົບຕໍ່ໄມ້ເສດຖະກິດໄມ້ເປັນຟືນໃນເນື້ອທີ.

- ມີຜົນກະທົບຕໍ່ເນື້ອທີ່ນາ ເນື້ອທີ່ສວນໝາກກ້ຽງ ເສຍອາຊີບ ກະທົບຕໍ່ສາຍນ້ຳຕ່າງໆ.

- ອີກບັນຫາໜຶ່ງ ການສະເໜີແມ່ນໄຟຟ້າບໍ່ພຽງພໍໃນການຜະລິດ ແລະ ຂຸດຄົ້ນ.

ຈຸດທີສາມ ຂົງເຂດສັງຄົມ (ຂົງເຂດສຶກສາ)

ໃນເຂດເລືອກຕັ້ງທີ 18 ມີຄູອາສາສະໝັກທີ່ເຮັດໜ້າທີ່ຕາມເຂດຊົນນະບົດ 300 ປາຍກວ່າຄົນຍ້ອນບັນຫາຊີວິດການເປັນຢູ່ ແລະ ບໍ່ໄດ້ຮັບໂອກາດຈຶ່ງລາອອກເກືອບເຄິ່ງໜຶ່ງ ເຊິ່ງເຫັນວ່າເປັນຜົນກະທົບຕໍ່ການຮຽນການສອນໃນແຕ່ລະຊັ້ນຂັ້ນຮຽນ.

- ບັນຫາເລື່ອງນ້ຳ ກໍແມ່ນບັນຫາສຳຄັນຂອງໂຮງຮຽນ ຜ່ານການຕິດຕາມກວດກາ ແລະ ການລາຍງານຂອງບັນດາໂຮງຮຽນ 157 ແຫ່ງ ມີຫຼາຍກວ່າເຄິ່ງໜຶ່ງເປັນໂຮງຮຽນທີ່ຂາດນ້ຳໃຊ້ ສ້າງຄວາມຫຍຸ້ງຍາກໃຫ້ຄູອາຈານ ແລະ ນັກຮຽນເວລາປະຕິບັດໜ້າທີ່ການຮຽນການສອນຢູ່ໂຮງຮຽນ.

ຈຸດທີສີ່ ກ່ຽວກັບບັນຫາການອອກໃບຕາດິນຢູ່ແຂວງໄຊສົມບູນ ແຜນການອອກໃບຕາດິນ ປີ 2023 15.576 ຕອນ ປະຕິບັດ 6 ເດືອນໄດ້ 4.263 ຕອນ ຍັງບໍ່ບັນລຸຄາດໝາຍເນື່ອງຈາກຂາດພະນັກງານ (ພະນັກງານລັດມີໜ້ອຍ ທັງເຮັດວຽກປະຈຳໂຄງການອອກໃບຕາດິນ ທັງໄປແກ້ໄຂວຽກງານວິຊາສະເພາະຢູ່ຫ້ອງການ).

ພະນັກງານສັນຍາໂຄງການຈຳນວນໜຶ່ງລາອອກຍ້ອນເງິນເດືອນໜ້ອຍຫຼາຍ ເຮັດໃຫ້ຂາດພະນັກງານເຮັດວຽກ ຖ້າເອົາເຂົ້າໃໝ່ຕ້ອງໄດ້ຜ່ານການຝຶກອົບຮົມອີກໃໝ່.

ອີກອັນໜຶ່ງ, ສິ່ງຢາກສະເໜີຕໍ່ລັດຖະບານ ຢາກໃຫ້ລັດຖະບານໄດ້ຊີ້ນຳຈິງຈັງຕື່ມການແກ້ໄຂບັນຫາຄວາມທຸກຍາກໃຫ້ປະຊາຊົນ ເພາະແມ່ນບັນຫານີ້ ແມ່ນຄວາມຮັບຜິດຊອບຂອງພັກ-ລັດຖະບານຂອງພວກເຮົາ.

# ການຄວບຄຸມເງິນເຟີ້ ລັດຖະບານຕ້ອງນຳໃຊ້ຫຼາຍມາດຕະການ

ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ທ່ານ ສຈ. ປອ. ທິງຄຳ ສຸວັນນະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ໄດ້ມີຄຳເຫັນຕໍ່ບົດລາຍງານການເຄື່ອນໄຫວຂອງລັດຖະບານ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການຈັດຕັ້ງແຜນງົບປະມານແຫ່ງລັດ, ການຈັດຕັ້ງແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຈາກການລາຍງານຂອງທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ, ອັດຕາເງິນເຟີ້ 6 ເດືອນຕົ້ນປີ ຂອງ ສປປ ລາວ ແມ່ນ 36.06% (ມະຕິສະພາແຫ່ງຊາດ ສະເລ່ຍໝົດປີບໍ່ເກີນ 9%).

ສປປ ລາວ ເຊັ່ນດຽວກັບຫຼາຍປະເທດອື່ນໆ ໃນຂົງເຂດ ກໍຄືທົ່ວໂລກ ໄດ້ປະເຊີນກັບສິ່ງທ້າທາຍຂອງອັດຕາ.

ເງິນເຟີ້ສູງ: ຜົນກະທົບຈາກເງິນເຟີ້ ເງິນເຟີ້ເພີ່ມຂຶ້ນຈະກະທົບຕໍ່ເສດຖະກິດຂອງປະເທດໂດຍລວມ ໂດຍສະເພາະແມ່ນມີຜົນກະທົບໂດຍກົງຕໍ່ພະນັກງານ, ຄົວເຮືອນ, ຫຼືຜູ້ບໍລິໂພກ ເຊິ່ງຈະສູນເສຍກຳລັງການຊື້ເມື່ອລາຄາຂອງສິນຄ້າທີ່ເຂົາເຈົ້າຊື້, ເຊັ່ນ: ອາຫານ, ເຄື່ອງອຸປະໂພກ ແລະ ນ້ຳມັນເພີ່ມຂຶ້ນ.

ພາກທຸລະກິດ ຈະສູນເສຍກຳລັງການການຜະລິດ ແລະ ມີຄວາມສ່ຽງທີ່ອັດຕາກຳໄລຂອງພວກເຂົາຫຼຸດລົງ, ເມື່ອລາຄາເພີ່ມຂຶ້ນສຳລັບວັດສະດຸນຳເຂົ້າທີ່ໃຊ້ໃນການຜະລິດ ເຊັ່ນ: ວັດຖຸດິບ, ໄຟຟ້າ ແລະ ນ້ຳມັນ, ຜະລິດຕະພັນລະດັບປານກາງເຊັ່ນ: ແປ້ງ ແລະ ເຫຼັກກ້າ ແລະ ເຄື່ອງຈັກສຳເລັດຮູບ.

ເພື່ອຄວບຄຸມໄພເງິນເຟີ້, ສະເໜີໃຫ້ລັດຖະບານໃຊ້ມາດຕະການຫຼາຍຢ່າງ ຂໍ້ສະເໜີມີລັກສະນະວິຊາການ (ເຊິ່ງບາງມາດຕະການ ລັດຖະບານໄດ້ມີການນຳໃຊ້ມາແລ້ວ ໃນໄລຍະທີ່ຜ່ານມາ) ດັ່ງລຸ່ມນີ້:

1. ມາດຕະການການຄຸ້ມຄອງນະໂຍບາຍການເງິນ; ນະໂຍບາຍການຄັງ (Fiscal policy) ແມ່ນພາບລວມການປະຕິບັດການເກັບພາສີ ແລະ ການໃຊ້ຈ່າຍຂອງລັດຖະບານ, ນະໂຍບາຍການເງິນ (Monetary policy) ແມ່ນກ່ຽວກັບການຄຸ້ມຄອງອັດຕາດອກເບ້ຍ ແລະ ການສະໜອງທັງໝົດຂອງເງິນໃນການໄຫຼວຽນ (Supply of money in circulation) ແລະ ໂດຍທົ່ວໄປແມ່ນດຳເນີນປະຕິບັດໂດຍທະນາຄານກາງ ຫລື ທະນາຄານແຫ່ງ ສປປ ລາວ, ລັດຖະບານສາມາດປະຕິບັດນະໂຍບາຍການເງິນໃຫ້ສາມາດຄຸ້ມຄອງຄວາມຕ້ອງການສິນຄ້າ ແລະ ການບໍລິການໂດຍລວມຂອງປະເທດ ໂດຍການປັບການເກັບພາສີ ແລະ ການໃຊ້ຈ່າຍສາທາລະນະ ນອກຈາກນັ້ນແລ້ວ ຍັງສາມາດຄວບຄຸມອັດຕາເງິນເຟີ້ໂດຍຜ່ານນະໂຍບາຍການເງິນໂດຍການຄວບຄຸມອັດຕາດອກເບ້ຍ, ການສະໜອງເງິນ ແລະ ສິນເຊື່ອນະໂຍບາຍການຄັງ ແລະ ການເງິນ Fiscal and monetary policies) ເປັນມາດຕະການໃນການຊຸກຍູ້ເສດຖະກິດຂອງປະເທດ ເພື່ອໃຫ້ເສດຖະກິດຂອງປະເທດສາມາດດຳເນີນໄປໃນຈັງຫວະທີ່ໝັ້ນຄົງໝາຍເຖິງການຂະຫຍາຍຕົວທີ່ດີ ແລະ ໄວທີ່ສຸດ ແຕ່ມັນຍັງຮຽກຮ້ອງໃຫ້ມີພື້ນຖານເສດຖະກິດທີ່ເຂັ້ມແຂງ, ຖ້າບໍ່ດັ່ງນັ້ນມັນອາດຈະເຮັດໃຫ້ເກີດຫຼາຍບັນຫາຕາມມາ ນຶ່ງຕົວຢ່າງ ກໍແມ່ນໄພເງິນເຟີ້.

2. ມາດຕະການເພີ່ມທະວີການຜະລິດ, ສປປ ລາວ ຄວນເສີມຂະຫຍາຍກຳລັງການຜະລິດໄດ້ດ້ວຍການລົງທຶນດ້ານພື້ນຖານໂຄງລ່າງ, ການສຶກສາ ແລະ ເຕັກໂນໂລຊີ ເພື່ອເພີ່ມການຜະລິດສິນຄ້າ ແລະ ການບໍລິການ ແລະ ຫຼຸດຜ່ອນການເພິ່ງພາອາໄສການນຳເຂົ້າ.

3. ມາດຕະການການຄວບຄຸມລາຄາ: ລັດຖະບານ



ສາມາດກຳນົດການຄວບຄຸມລາຄາຕໍ່ສິນຄ້າ ແລະ ການບໍລິການທີ່ຈຳເປັນເພື່ອປ້ອງກັນການຂຶ້ນລາຄາທີ່ສາມາດນຳໄປສູ່ອັດຕາເງິນເຟີ້, ຢ່າງໃດກໍຕາມ, ການຄວບຄຸມລາຄາຄວນໄດ້ຮັບການປະຕິບັດຢ່າງລະມັດລະວັງ, ຍ້ອນວ່າອາດຈະສ້າງໃຫ້ມີການຂັດຂວາງຈາກຜູ້ຜະລິດ ແລະ ພໍ່ຄ້າ ແລະ ນຳໄປສູ່ການຂາດແຄນສິນຄ້າຕາມມາ.

4. ມາດຕະການນະໂຍບາຍອັດຕາແລກປ່ຽນ ສປປ ລາວ ສາມາດຮັບຮອງເອົານະໂຍບາຍອັດຕາແລກປ່ຽນເພື່ອຄຸ້ມຄອງອັດຕາແລກປ່ຽນ ແລະ ຫຼຸດຜ່ອນອັດຕາເງິນເຟີ້ຂອງລາຄານຳເຂົ້າ, ອັດຕາແລກປ່ຽນທີ່ຄົງທີ່ ອາດຈະຂັດຂວາງຄົນຕ່າງປະເທດຈາກການໄດ້ຮັບຜົນປະໂຫຍດຈາກອັດຕາແລກປ່ຽນເງິນຕາຕ່ຳ, ໃນຂະນະທີ່ອັດຕາແລກປ່ຽນທີ່ລອຍຕົວ (Floating exchange rate) ຈະຊ່ວຍໃຫ້ສະກຸນເງິນສາມາດປັບຕົວຕາມການສະໜອງ (Supply) ແລະ ຄວາມຕ້ອງການ (Dernand) ຂອງຕະຫຼາດ.

5. ມາດຕະການນະໂຍບາຍດ້ານການສະໜອງ (Supply-Side Policies): ແມ່ນມາດຕະການຂອງລັດຖະບານ ທີ່ມີຄວາມພະຍາຍາມເພີ່ມປະສິດທິຜົນ ແລະ ເພີ່ມປະສິດທິພາບໃນເສດຖະກິດ. ຕ້ອງມີນະໂຍບາຍດ້ານການສະໜອງເພື່ອມີຄວາມສາມາດເພີ່ມທະວີການສະໜອງສິນຄ້າ ແລະ ການບໍລິການ ໂດຍການອຳນວຍຄວາມສະດວກໃຫ້ແກ່ການລົງທຶນຂອງເອກະຊົນ, ການຈັດໃຫ້ມີລະບຽບການ ແລະ ການຫຼຸດອັດຕາພາສີ.

ໃນການປະຕິບັດນະໂຍບາຍເສດຖະກິດ ລັດຖະບານສ່ວນຫຼາຍ ມັກຈະສຸມໃສ່ນະໂຍບາຍ ແລະ ມາດຕະການທີ່ມີຜົນກະທົບເສດຖະກິດດ້ານຄວາມຕ້ອງການ ເພື່ອກະຕຸ້ນຊຸກຍູ້ການເຕີບໂຕ ແລະ ຮັກສາສະຖຽນລະພາບດ້ານເສດຖະກິດ ເຊິ່ງຕົວແປທີ່ສຳຄັນແມ່ນການບໍລິໂພກ, ການລົງທຶນ ແລະ ການໃຊ້ຈ່າຍຂອງລັດຖະບານ, ພ້ອມທັງຊຸກຍູ້ຄວາມຕ້ອງການຂອງສິນຄ້າສົ່ງອອກໃຫ້ຫຼາຍຂຶ້ນ ແລະ ສະກັດກັ້ນການນຳເຂົ້າ ດ້ວຍມາດຕະການຕ່າງໆ ເພື່ອຊຸກຍູ້ໃຫ້ປະຊາຊົນນຳໃຊ້ຜະລິດຕະພັນພາຍໃນປະເທດໃຫ້ຫຼາຍຂຶ້ນ.

ຄວາມໝາຍອີກອັນໜຶ່ງຂອງການຄຸ້ມຄອງດ້ານຄວາມຕ້ອງການແມ່ນການນຳໃຊ້ວິທີການ ຫຼື ມາດຕະການຈຸດປະສົງເພື່ອເຮັດໃຫ້ການນຳໃຊ້ຊັບພະຍາກອນມີປະສິດທິພາບ, ຕົວຢ່າງເຊັ່ນ ໃນການນຳໃຊ້ນ້ຳມັນ ຫຼືຊັບພະຍາກອນທຳມະຊາດອື່ນໆ, ອາດຈະໃຊ້ມາດຕະການໃນດ້ານລາຄາ ແລະ ສະໜອງຂໍ້ມູນໃຫ້ຜູ້ບໍລິໂພກເພື່ອນຳໃຊ້ຊັບພະຍາກອນຢ່າງບໍ່ສິ້ນເປືອງ.

ນອກນີ້, ຍັງມີຫຼາຍມາດຕະການ ທີ່ສາມາດຄວບຄຸມໄພເງິນເຟີ້ໄດ້ຫຼາຍຢ່າງ ເຊັ່ນ: ການຊຸກຍູ້ໃຫ້ມີຄວາມໂປ່ງໃສ ແລະ ການຄຸ້ມຄອງທີ່ດີ ເພື່ອສະກັດກັ້ນການສໍ້ລາດບັງຫຼວງ ແລະ ການນຳໃຊ້ຊັບພະຍາກອນສາທາລະນະຢ່າງຖືກຕ້ອງ, ປະຕິບັດລະບຽບການເພື່ອຮັບປະກັນໃຫ້ຕະຫຼາດທີ່ມີຄວາມຍຸຕິທຳ ແລະ ມີການແຂ່ງຂັນ, ເສີມຂະຫຍາຍລະບົບຄຸ້ມຄອງການເງິນພາກລັດ ແລະ ອື່ນໆ.

ເຖິງຢ່າງໃດກໍຕາມ, ຄວາມສຳເລັດຂອງການໃຊ້ມາດຕະການເຫຼົ່ານີ້ ຈະຂຶ້ນກັບຫຼາຍປັດໄຈ ເຊັ່ນ: ສະພາບເສດຖະກິດ ແລະ ການມີສະຖຽນລະພາບທາງດ້ານການເມືອງຂອງປະເທດ, ການຮ່ວມມືລະຫວ່າງລັດຖະບານ, ທະນາຄານກາງ, ພາກສ່ວນເອກະຊົນ ແລະ ປະຊາຊົນ.

# ສະພາປະຊາຊົນແຂວງອັດຕະປື ຕິດຕາມກວດກາການປະຕິບັດກົດໝາຍ

(ສພຊ) ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງອັດຕະປື ໄດ້ເຄື່ອນໄຫວດຳເນີນກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ 2023 ທີ່ຫ້ອງວ່າການປົກຄອງເມືອງສາມັກຄີໄຊ, ເມືອງຊານໄຊ ແລະ ເມືອງໄຊເສດຖາ ເມື່ອກາງເດືອນມິຖຸນາຜ່ານມາ ໂດຍການເປັນປະທານຂອງທ່ານ ແຫວນຄຳ ປະທຸມມະແສງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າສະພາປະຊາຊົນແຂວງ; ມີບັນດາທ່ານຄະນະນຳຂອງເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະທີມງານຈາກສະພາປະຊາຊົນແຂວງ, ຕາງໜ້າຫ້ອງການ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກບັນດາຮອງເຈົ້າເມືອງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນຂົງເຂດວັດທະນະທຳ-ສັງຄົມໃນເມືອງຂອງຕົນ. ນອກນີ້, ຍັງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມລາຍງານຕາມການເຈາະຈີ້ມຂອງປະທານກອງປະຊຸມ ແລະ ສະມາຊິກສະພາປະຊາຊົນແຂວງໃນການຕິດຕາມກວດກາຄັ້ງນີ້ ຢ່າງມີຈຸດສຸມ ເພື່ອຕອບສະໜອງດ້ານຂໍ້ມູນໃຫ້ຮັດກຸມ ແລະ ເປັນຂໍ້ມູນໃນຄັ້ງນີ້ອີກດ້ວຍ.

ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ໃນການຈັດຕັ້ງປະຕິບັດບັນດາຄາດໝາຍ ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຄຽງຄູ່ກັບການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ລົງເລິກວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ເພື່ອເປັນຂໍ້ມູນພື້ນຖານໃນການກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ເທື່ອທີ IX.



ໂອກາດດັ່ງກ່າວ, ທ່ານ ແຫວນຄຳ ປະທຸມມະແສງ ໄດ້ມີຄຳເຫັນບ້າງດ້ານເພື່ອຊຸກຍູ້ຂະແໜງການກ່ຽວຂ້ອງສືບຕໍ່ເອົາໃຈໃສ່ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ, ເພີ່ມທະວີການຈັດຕັ້ງເຜີຍແຜ່ວຽກງານໃຫ້ປະຊາຊົນຮັບຮູ້, ເຊື່ອມຊຶມ ເຂົ້າໃຈຢ່າງທົ່ວເຖິງ, ປະສານສົມທົບຢ່າງກົມກຽວກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງວຽກງານເພື່ອໃຫ້ມີປະສິດຕິພາບ ແລະ ປະສິດທິຜົນ.

ໃນໄລຍະດຽວກັນ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ) ສະພາປະຊາຊົນແຂວງອັດຕະປື ກໍໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ 2023 ໃນຂົງເຂດເສດຖະກິດ, ແຜນການ ແລະ ການເງິນ ທີ່ຫ້ອງວ່າການປົກຄອງເມືອງສະໜາມໄຊ ແລະ ເມືອງສາມັກຄີໄຊ ນຳໂດຍທ່ານ ສຸກສຳລານ ໄຊຍະແສງ ຮອງປະທານສະພາປະຊາຊົນແຂວງ ທັງເປັນປະທານ ຄສຜງ ພ້ອມດ້ວຍຄະນະ; ເຂົ້າຮ່ວມມີບັນດາຮອງເຈົ້າເມືອງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ ແລະ ວິຊາການທີ່ກ່ຽວຂ້ອງ.

ໂອກາດເຄື່ອນໄຫວທີ່ເມືອງສະໜາມໄຊ, ທ່ານ ສົມໄຊ ສຸລິຍະວົງ ຮອງເຈົ້າເມືອງເມືອງສະໜາມໄຊ ຜູ້ຊີ້ນຳວຽກງານເສດຖະກິດ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ເດືອນຕົ້ນປີ ໃຫ້ຊາບວ່າ: ວຽກງານແຜນການ ແລະ ການລົງທຶນ ໂດຍພື້ນຖານການຈັດຕັ້ງປະຕິບັດໂຄງການລົງທຶນພາຍໃນເມືອງມີຄວາມສະດວກຫຼາຍປັດໃຈທີ່ສຳຄັນ ເປັນຕົ້ນແມ່ນດ້ານແຫຼ່ງທີ່ມາຂອງທຶນ, ສະຖານທີ່, ການຮ່ວມມື-ການຮັບຜິດຊອບຕ່າງໆ ຄຽງຄູ່ກັນນັ້ນ ກໍຍັງມີຂໍ້ຫຍຸ້ງຍາກບາງໂຄງການທີ່ຕິດພັນກັບຂະແໜງການບໍ່ໄດ້ຜ່ານຫ້ອງການແຜນການ ແລະ ການລົງທຶນ ແລະ ບັນດາໂຄງການທີ່ມາລົງທຶນ 5 ຕື້ລົງມາ ສ່ວນໃຫ່ຍແມ່ນບໍ່ທັນມອບຂາດຕົວໃຫ້ເມືອງຄຸ້ມຄອງປະຕິບັດເປັນຜູ້ຕິດຕາມ, ໂຄງການລົງທຶນຂອງລັດຢູ່ເມືອງມີທັງໝົດ 15 ໂຄງການ, ໄດ້ຮັບທຶນໂຄງການຊ່ວຍເຫຼືອເພື່ອການພັດທະນາ ODA ມີທັງໝົດ 52 ໂຄງການ, ການລົງທຶນຂອງເອກະຊົນໃນ ແລະ ຕ່າງປະເທດ ລົງມາຈັດຕັ້ງປະຕິບັດມີ 44 ໂຄງການ, ວຽກງານການເງິນເກັບລາຍຮັບເຂົ້າງົບປະມານໄດ້ 8,4 ຕື້ກວ່າກີບ ເທົ່າກັບ 32%, ດ້ານລາຍຈ່າຍປະຕິບັດໄດ້ 3,4 ຕື້ກວ່າກີບ ທຽບໃສ່ແຜນປີໄດ້ 40%, ວຽກງານກະສິກຳ ໄດ້ລົງທຶນ, ສະໜອງປັດໄຈການຜະລິດ ແລະ ວິຊາການກະສິກຳເພື່ອລົງຊຸກຍູ້ປະຊາຊົນ ເຮັດໃຫ້ການຜະລິດກະສິກຳມີການຂະຫຍາຍຕົວທາງດ້ານປະລິມານ ແລະ ມີສະມັດຕະພາບສູງຂຶ້ນ, ເພື່ອສາມາດຜະລິດສະບຽງອາຫານພຽງພໍ, ມີສ່ວນສະສົມ ແລະ ຂາຍອອກເປັນສິນຄ້າຈຳນວນໜຶ່ງ; ການປັບປຸງ ແລະ ກໍ່ສ້າງຊົນລະປະທານຜ່ານມາ ກໍສາມາດສະໜອງນ້ຳໃຫ້ແກ່ການປູກຝັງ-ລ້ຽງສັດມີຄວາມສະດວກຂຶ້ນ ເຊິ່ງມີເນື້ອທີ່ການຜະລິດທັງໝົດ 425 ເຮັກຕາ, ປະຕິບັດຕົວຈິງໄດ້ 151 ເຮັກຕາ ທຽບໃສ່ແຜນ ປະຕິບັດໄດ້ 35,25%. ວຽກງານອຸດສາຫະກຳ-ການຄ້າ ການຄຸ້ມຄອງນຳເຂົ້າສິນຄ້າ ແລະ ຄຸ້ມຄອງລາຄາສິນຄ້າ ສ່ວນໃຫຍ່ສິນຄ້າຄ້າມາຈາກແຂວງ, ຕ່າງແຂວງ, ຕ່າງເມືອງ ເປັນສິນຄ້າທີ່ມີການເສຍພາສີອາກອນຢ່າງຖືກຕ້ອງເປັນສ່ວນຫຼາຍ. ການຄຸ້ມຄອງລາຄາແມ່ນຈະໄດ້ຄຸ້ມຄອງຢູ່ໃນປະເພດສິນຄ້າບັນຊີຄວບຄຸມລວມມີ 8 ປະເພດ: ບັນຊີ (ກ) ນ້ຳມັນເຊື້ອໄຟ, ເຂົ້າ, ຊີ້ນງົວ-ຄວາຍ, ປາລ້ຽງ, ເຫຼັກ, ຊີມັງ, ປະເພດອາຍແກັສ, ໄກ່ປອກແລ້ວ, ບັນຊີ(ຂ) ແມ່ນບັນຊີຕິດຕາມເໜັງຕີງລວມມີ 7 ປະເພດ: ໝວດສະບຽງອາຫານ, ໝວດເຄື່ອງກໍ່ສ້າງ, ໝວດເຄື່ອງໃຊ້ການສຶກສາ, ໝວດເຄື່ອງໃຊ້ການຜະລິດກະສິກຳ, ໝວດເຄື່ອງໃຊ້ຄົວເຮືອນ, ໝວດນ້ຳມັນເຊື້ອໄຟ, ໝວດວັດຖຸມີຄ່າ.

ທີ່ເມືອງສາມັກຄີໄຊ, ທ່ານ ຂັນທອງ ຈະເລີນສຸກ ຮອງເຈົ້າເມືອງ ກໍໄດ້ລາຍງານສະພາບພົ້ນເດັ່ນໃນການຈັດຕັ້ງປະຕິບັດວຽກງານໃນຂົງເຂດເສດຖະກິດຂອງເມືອງໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2023 ຂອງສາມັກຄີໄຊ; ພ້ອມນັ້ນ, ກໍໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງຕໍ່ກັບຄຳເຈາະຈີ້ມຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ທັງໄດ້ແລກປ່ຽນຄວາມຄິດເຫັນຕໍ່ບັນດາຂໍ້ຫຍຸ້ງຍາກ ແລະ ຄົງຄ້າງໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ບັນຫາທີ່ເຄັ່ງຮ້ອນຂອງສອງເມືອງດັ່ງກ່າວ.

ໂອກາດດັ່ງກ່າວ, ທ່ານ ສຸກສຳລານ ໄຊຍະແສງ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໃຫ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ໃຫ້ມີຄວາມຖືກຕ້ອງສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ສຸມໃສ່ຄຸ້ມຄອງບັນດາໂຄງການລົງທຶນຂອງລັດ ຕາມການແບ່ງຂັ້ນຄຸ້ມຄອງ, ເອົາໃຈໃສ່ຄຸ້ມຄອງເສດຖະກິດມະຫາພາກ ຂອງເມືອງ, ລົງເລິກຄົ້ນຄວ້າວິເຄາະວິໄຈເຖິງສະພາບຄວາມຫຍຸ້ງຍາກໃນປັດຈຸບັນເປັນຕົ້ນແມ່ນການຂາດດູນງົບປະມານ, ການຮົ່ວໄຫຼຂອງການຈັດເກັບລາຍຮັບ, ຊອກຄົ້ນຫາຖານລາຍຮັບທີ່ແທ້ຈິງ ຫລື ທີ່ຍັງບົ່ມຊ້ອນຢູ່, ເລັ່ງເກັບຈາກຖານລາຍຮັບທີ່ມີຢູ່ແລ້ວ ແລະ ຂະຫຍາຍຖານລາຍຮັບໃໝ່ທີ່ມີທ່າແຮງ ໂດຍມີກົນໄກລະອຽດໃນການຈັດເກັບທີ່ນຳໃຊ້ເຄື່ອງມືທັນສະໄໝ; ຍົກສູງປະສິດທິຜົນລາຍຈ່າຍງົບປະມານລັດ ມີຍຸດທະສາດ, ມີແຜນການແກ້ໄຂໜີ້ສິນໃນແຕ່ລະໄລຍະ, ດຳເນີນການປະຢັດຕ້ານການຟຸມເຟືອຍ ແລະ ຈຳກັດລາຍຈ່າຍງົບປະມານທີ່ບໍ່ຈຳເປັນ, ຕັ້ງໜ້າປະຕິບັດວິໄນແຜນການ-ການເງິນ ໃຫ້ດີຂຶ້ນກວ່າເກົ່າ, ເອົາໃຈໃສ່ແກ້ໄຂຜົນການກວດສອບ ໂດຍສະເພາະບັນຫາທີ່ຊຳເຮື້ອແກ່ຍາວ ເຮັດໃຫ້ທຸກການຈັດຕັ້ງປະຕິບັດວຽກງານຫັນເຂົ້າສູ່ການຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍຢ່າງເຂັ້ມແຂງ.

**(ຈັນທະຈອນ ແລະ ວິມັດ)**



# ສະພາປະຊາຊົນແຂວງວຽງຈັນ ປາຖະກະຖາ 2 ວັນສຳຄັນຂອງຊາດ

(ສພຊ) ຈັດຕັ້ງເຊື່ອມຊຶມ ແລະ ທົບທວນຄືນມູນເຊື້ອການຕໍ່ສູ້ພິລະອາດຫານ, ມູນເຊື້ອອັນສະຫງ່າອົງອາດ, ນ້ຳໃຈເສຍສະຫຼະເລືອດເນື້ອຕໍ່ສູ້ກູ້ຊາດຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ ໂດຍສະເພາະແມ່ນກອງພັນທີ 2 ທີ່ຜ່າວົງປິດລ້ອມຂອງສັດຕູ ກັບຄືນສູ່ເຂດທີ່ໝັ້ນ ແລະ ລະນຶກວັນວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາຜູ້ນຳຂອງພັກ ແລະ ແນວລາວສ້າງຊາດ ຄົບຮອບ 63 ປີ ເພື່ອເສີມຂະຫຍາຍມູນເຊື້ອນ້ຳໃຈຮັກຊາດ,



ເພີ່ມທະວີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກແຂວງ ໃຫ້ປະກົດຜົນເປັນຈິງໃນຕໍ່ໜ້າ ທັງເປັນການໂຄສະນາສຶກສາ-ອົບຮົມ, ຮໍ່າຮຽນເອົາມູນເຊື້ອ, ສ້າງຄວາມຮັບຮູ້ແນວຄິດ ແລະ ການກະທຳ, ສ້າງຄວາມເຊື່ອໝັ້ນຂອງພະນັກງານ-ສະມາຊິກພັກພາຍໃນອົງການຕໍ່ການນຳພາຂອງພັກ ເພີ່ມທະວີຄວາມຮັບຜິດຊອບປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືແຂວງວຽງຈັນຂອງພວກເຮົາກ້າວຂຶ້ນສູ່ຄວາມສີວິໄລ.

ສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປາຖະກະຖາ 2 ວັນປະຫັວດສາດສຳຄັນຄື: ວັນຜ່າວົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນຊຽງຂວາງ ຄົບຮອບ 64 ປີ (18/5/1959-18/5/2023) ແລະ ວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາຜູ້ນຳຂອງພັກ ແລະ ແນວລາວສ້າງຊາດ ຄົບຮອບ 63 ປີ (24/5/1960-24/5/2023) ໂດຍການເປັນປະທານຮ່ວມຂອງທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ແລະ ທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີຄະນະກຳມາການ, ຮອງເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ, ສະມາຊິກພັກ, ພະນັກງານພາຍໃນສະພາປະຊາຊົນແຂວງວຽງຈັນເຂົ້າຮ່ວມຢ່າງພ້ອມພຽງ.






# ກົດໝາຍ ວ່າດ້ວຍວິຈິດສິນ

ຕໍ່ຈາກສະບັບກ່ອນ

**ມາດຕາ 18 ວິຈິດສິນຮ່ວມສະໄໝ**

ວິຈິດສິນຮ່ວມສະໄໝ ແມ່ນຜົນງານດ້ານວິຈິດສິນທີ່ມີເອກະລັກຂອງຊາດ, ມີການປະສົມປະສານລະຫວ່າງອັນໃໝ່ ແລະ ອັນເກົ່າ ຊຶ່ງມີລັກສະນະກ້າວໜ້າ ທີ່ຮັບໃຊ້ສັງຄົມໃນປັດຈຸບັນ ເພື່ອໃຫ້ສອດຄ່ອງກັບວິວັດທະນາການຂອງສັງຄົມ ແລະ ການພັດທະນາປະເທດຊາດ ດ້ວຍການປັ້ນ, ການຫຼໍ່ອະນຸສາວະລີບັນພະບູລຸດ, ບຸກຄົນສຳຄັນທາງປະຫວັດສາດ; ການແຕ້ມ, ການພິມ, ການຄວັດແກະສະຫຼັກ ຫຼື ການກໍ່ສ້າງດ້ວຍວັດສະດຸ, ໂລຫະຕ່າງໆ.

**ມາດຕາ 19 ວິຈິດສິນແບບສ້າງສັນ**

ວິຈິດສິນແບບສ້າງສັນ ແມ່ນຜົນງານດ້ານວິຈິດສິນທີ່ມີການປະດິດສ້າງໃຫ້ມີຄວາມແປກໃໝ່ ໂດຍມີການປະສົມປະສານດ້ານສິລະປະ ເປັນຕົ້ນ ການແຕ້ມ, ການຄວັດແກະສະຫຼັກ, ການປັ້ນ, ການຫຼໍ່, ການພິມໃຫ້ທັນຍຸກສະໄໝ ມີລັກສະນະກ້າວໜ້າ ແລະ ສາກົນ ຫຼາຍຂຶ້ນ.

**ໝວດທີ 3**

**ລະດັບຂອງວິຈິດສິນ**

**ມາດຕາ 20 ລະດັບຂອງວິຈິດສິນ**

ວິຈິດສິນ ມີ ສອງລະດັບ ດັ່ງນີ້:

1. ວິຈິດສິນລະດັບທ້ອງຖິ່ນ;
2. ວິຈິດສິນລະດັບຊາດ.

ສຳລັບ ເງື່ອນໄຂ, ມາດຕະຖານ ແລະ ຂັ້ນຕອນ ການຈັດລະດັບຂອງວິຈິດສິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 ວິຈິດສິນລະດັບທ້ອງຖິ່ນ**

ວິຈິດສິນລະດັບທ້ອງຖິ່ນ ແມ່ນ ຜົນງານດ້ານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ລະດັບທ້ອງຖິ່ນ ທາງດ້ານວັດທະນະທຳ, ປະຫວັດສາດ ຊຶ່ງສ້າງຂຶ້ນ, ຕັ້ງຢູ່ ຫຼື ເກັບຮັກສາໄວ້ໃນພື້ນທີ່ຂອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຂຶ້ນທະບຽນເປັນວິຈິດສິນລະດັບທ້ອງຖິ່ນ.

**ມາດຕາ 22 ວິຈິດສິນລະດັບຊາດ**

ວິຈິດສິນລະດັບຊາດ ແມ່ນຜົນງານດ້ານວິຈິດສິນທີ່ມີເອກະລັກ, ຄຸນຄ່າສູງ, ລວດລາຍສິລະປະອັນປານີດ, ໂດດເດັ່ນ ແລະ ຫາຍາກລະດັບຊາດທາງດ້ານວັດທະນະທຳ, ປະຫວັດສາດ ຊຶ່ງສ້າງຂຶ້ນ, ຕັ້ງຢູ່ ຫຼື ເກັບຮັກສາໄວ້ ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ໄດ້ຂຶ້ນທະບຽນເປັນວິຈິດສິນລະດັບຊາດ.

ອ່ານຕໍ່ສະບັບໜ້າ

## ປະທານສະພາ...

(ຕໍ່ຈາກໜ້າ 1)

ສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ແລະ ປະຊາຊົນ 2 ຊາດ ລາວ ແລະ ມາເລເຊຍ ໃຫ້ດີຂຶ້ນເລື້ອຍໆ; ພ້ອມກັນນັ້ນ, ຍັງໄດ້ແຈ້ງໃຫ້ຊາບໂດຍຫຍໍ້ສະພາບການພັດທະນາເສດຖະກິດ-ສັງຄົມ ກໍຄືການເຄື່ອນໄຫວຂອງສະພາແຫ່ງຊາດລາວ ຊຸດທີ IX.

ທ່ານ ປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ຕີລາຄາສູງຕໍ່ການສະໜັບສະໜູນຊ່ວຍເຫຼືອຂອງລັດຖະບານ ແລະ ປະຊາຊົນມາເລເຊຍ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການຊ່ວຍເຫຼືອລ້າ (ODA) ເຂົ້າໃນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ເປັນຕົ້ນແມ່ນການສະໜອງຢາວັກແຊັງຕ້ານພະຍາດໂຄວິດ-19 ແລະ ອຸປະກອນການແພດຕ່າງໆ ພ້ອມທັງສະແດງຄວາມຫວັງວ່າ ມາເລເຊຍ ຈະສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ໃນຕໍ່ໜ້າ ໂດຍສະເພາະແມ່ນການເປັນປະທານອາຊຽນ ແລະ ການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 (AIPA-45) ໃນປີ 2024 ທີ່ນະຄອນຫຼວງວຽງຈັນ ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ.

ໃນການມາຢ້ຽມຢາມຄັ້ງນີ້, ທ່ານ ອັນວາ ອິບບຣາຮິມ ນາຍົກລັດຖະມົນຕີ ແຫ່ງມາເລເຊຍ ໄດ້ສະແດງຄວາມຂອບໃຈຕໍ່ທ່ານ ປອ. ໄຊສົມພອນ ພົມວິຫານ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນໃນຄັ້ງນີ້, ພ້ອມທັງສະແດງຄວາມຊົມເຊີຍຕໍ່ຜົນສຳເລັດດ້ານຕ່າງໆ ທີ່ ສປປ ລາວ ຍາດມາໄດ້ໃນຕະຫຼອດໄລຍະຜ່ານມາ, ພ້ອມທັງເຊື່ອໝັ້ນວ່າ ສປປ ລາວ ຈະສືບຕໍ່ໄດ້ຮັບການພັດທະນາໃນຕໍ່ໜ້າ.

ພ້ອມດຽວກັນນັ້ນ, ສອງຝ່າຍ ຕີລາຄາສູງຕໍ່ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ໄດ້ມີບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເປັນຮູບປະທຳຍິ່ງຂຶ້ນ, ການພົວພັນຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດຂອງສອງປະເທດ ກໍສືບຕໍ່ຂະຫຍາຍຕົວ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ສອງປະເທດ ລາວ-ມາເລເຊຍ.

ໃນຕອນທ້າຍ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືສອງຝ່າຍ ລາວ-ມາເລເຊຍ ຈົ່ງສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງຂຶ້ນ, ພ້ອມທັງອວຍພອນໃຫ້ທ່ານນາຍົກລັດຖະມົນຕີພ້ອມດ້ວຍຄະນະຜູ້ແທນ ຈົ່ງເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບທຸກປະການ.

## ຕົ້ນປີ...

(ຕໍ່ຈາກໜ້າ 1)

ປີ 2022ໄດ້ 957.629 ເຮັກຕາ, ຜົນຜະລິດ 3,78 ລ້ານໂຕນ ທຽບໃສ່ກ່ອນມີວາລະແຫ່ງຊາດແມ່ນເພີ່ມຂຶ້ນ 0,3% (ເນື້ອທີ່ 936.662 ເຮັກຕາ, ຜົນຜະລິດ 3,66 ລ້ານໂຕນ), ມາຮອດເດືອນພຶດສະພາ 2023 ສາມາດເກັບກ່ຽວຜົນຜະລິດເຂົ້ານາແຊງໄດ້ 441.850 ໂຕນ ແລະ ປູກພືດສະບຽງອາຫານໄດ້ປະມານ 1,07 ລ້ານໂຕນ ໃນເນື້ອທີ່ 125.870 ເຮັກຕາ ເຊິ່ງຈຸດພິເສດໃນການເກັບກ່ຽວເຂົ້ານາແຊງໃນປີນີ້ປະຕິບັດໄດ້ຕາມແຜນ ຍ້ອນປະຊາຊົນຫັນມານຳໃຊ້ກົນຈັກທົດແທນການນຳໃຊ້ແຮງງານຄົນຫຼາຍຂຶ້ນ, ປູກພືດສະບຽງອາຫານເພື່ອບໍລິໂພກພາຍໃນ ແລະ ປ້ອນໂຮງງານອຸດສະຫະກຳປຸງແຕ່ງໃນປີ 2022 ໄດ້ຜົນຜະລິດ 2.3.69.580 ໂຕນທຽບໃສ່ກ່ອນປະຕິບັດວາລະແຫ່ງຊາດເພີ່ມຂຶ້ນ 14,4% (ເນື້ອທີ່ການຜະລິດ 192.851 ເຮັກຕາ, ຜົນຜະລິດ 2.070.927 ໂຕນ), ມາຮອດເດືອນພຶດສະພາ 2023 ປູກພືດສິນຄ້າລະດູແລ້ງໄດ້ 45.359 ເຮັກຕາ ເທົ່າກັບ 136% ຂອງແຜນການ (ສາເຫດຍ້ອນຊາວກະສິກອນຫັນມາປູກມັນຕົ້ນ, ອ້ອຍຫຼາຍຂຶ້ນໃນລະດູແລ້ງນີ້). ປີ 2022 ສາມາດຜະລິດຊີ້ນ, ໄຂ່ ແລະ ປາ ໄດ້ທັງໝົດ 507.644 ໂຕນ ທຽບ ໃສ່ກ່ອນປະຕິບັດວາລະແຫ່ງຊາດເພີ່ມຂຶ້ນ 4,5% (ຈາກ 485.480 ໂຕນ), ມາຮອດປັດຈຸ ບັນຜະລິດໄດ້ 263.095 ໂຕນ, ປະຕິບັດໄດ້ 49,5% ຂອງແຜນການປີ;

- ສຳເລັດການຄົ້ນຄວ້າດັດສົມການຜະລິດແນວພັນພືດ-ສັດ ລວມທັງປັດໄຈການຜະລິດຕ່າງໆ ດ້ວຍການດຸ່ນດ່ຽງຄວາມສາມາດການຜະລິດພາຍໃນ ແລະ ການນຳເຂົ້າຈາກຕ່າງປະເທດ ເປັນຕົ້ນແນວພັນທີ່ພາຍໃນສາມາດຜະລິດໄດ້ກຸ້ມຕົນເອງ 100% ເຊິ່ງມີແນວພັນເຂົ້າ; ມາຮອດປັດຈຸບັນໄດ້ມອບຮັບໃບຢັ້ງຢືນແນວພັນເຂົ້າໃໝ່ແລ້ວ 5 ແນວພັນ ແລະ ໄດ້ກຳນົດບັນຊີລາຍການສິນຄ້າສົ່ງເສີມການຜະລິດພາຍໃນເພື່ອຫຼຸດຜ່ອນການນຳເຂົ້າປະເພດພືດ 9 ຊະນິດ ແລະ ປະເພດສັດ ມີ 3 ບັນຊີ; ກຳນົດບັນຊີທີ່ອະນຸຍາດໃຫ້ນຳເຂົ້າ (ແນວພັນ), ບັນຊີທີ່ອະນຸຍາດໃຫ້ນຳເຂົ້າແຕ່ມີເງື່ອນໄຂ ແລະ ບັນຊີທີ່ບໍ່ອະນຸຍາດ ຫຼື ຫ້າມນຳເຂົ້າໂດຍເດັດຂາດ; ສຳລັບແນວພັນທີ່ພາຍໃນຕ້ອງໄດ້ນຳເຂົ້າສ່ວນໜຶ່ງມີຄື: ສາມາດຜະລິດເອງໄດ້ 60-75% ມີແນວພັນຢາງພາລາ, ແນວພັນມັນຕົ້ນ, ແນວພັນທີ່ຍັງຕ້ອງນຳເຂົ້າຫຼາຍກວ່າ 80% ມີແນວພັນສາລີ, ອາຫານສັດ, ແນວພັນພືດຜັກ, ແນວພັນໄມ້ໃຫ້ໝາກ;

- ຊຸກຍູ້ສົ່ງເສີມຊາວກະສິກອນ ແລະ ປະກອບການຜະລິດຝຸ່ນຊີວະພາບເພື່ອຕອບສະໜອງຕາມຄວາມຕ້ອງການພາຍໃນ, ໃນປີ 2022 ມີຈຳນວນ 95 ໂຮງງານທີ່ດຳເນີນການຜະລິດ ໄດ້ 100.077 ໂຕນ ເພີ່ມຂຶ້ນ 60.077 ໂຕນ ຈາກປີ 2021, ມາຮອດເດືອນພຶດສະພາ 2023 ມີໂຮງງານຜະລິດອາຫານສັດ ຈຳນວນ 7 ແຫ່ງ (ເພີ່ມຈາກປີ 2022 ຈຳນວນ 1 ແຫ່ງ), ສາມາດຜະລິດໄດ້ 30.923,61 ໂຕນ ກວມປະມານ 60% ຂອງຄວາມຕ້ອງການພາຍໃນ (592.670 ໂຕນ);

- ຜ່ານການຊຸກຍູ້ສົ່ງເສີມ ແລະ ຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆໃນການຫຼຸດຜ່ອນການນຳເຂົ້າສິ່ງຜົນໃຫ້ຕົວເລກການນຳເຂົ້າພືດ ແລະ ຜະລິດຕະພັນສັດ ມີມູນຄ່າຫຼຸດລົງ 11,54 ລ້ານໂດລາ (ນຳເຂົ້າ ປີ 2021 ມີມູນຄ່າ 98,75 ລ້ານໂດລາ ແລະ ປີ 2022 ມູນຄ່າ 87,21 ລ້ານໂດລາ). ສຳລັບການນຳເຂົ້າທີ່ຜ່ານດ່ານກັກກັນພືດສາກົນໃນໄລຍະ 5 ເດືອນຕົ້ນປີ 2023 ມີມູນຄ່າທັງໝົດ 47,01 ລ້ານໂດລາ ທຽບໃສ່ໄລຍະ 5 ເດືອນ ປີ 2022 ເພີ່ມຂຶ້ນ 14,26 ລ້ານໂດລາ ຫລືເທົ່າກັບ 43,54%,

- ການຜະລິດພືດທີ່ໄດ້ຮັບການເຈລະຈາເປີດຕະຫຼາດແລ້ວ ເຊິ່ງໃນປີ 2022 ສາມາດປະຕິບັດໄດ້ 563.456 ເຮັກຕາ, ຜົນຜະລິດ 8,17 ລ້ານກວ່າໂຕນ ບັນລຸລື່ນແຜນການ 29,46% (ແຜນ 6,31 ລ້ານໂຕນ) ແລະ ທຽບໃສ່ການຈັດຕັ້ງປະຕິບັດໃນປີ 2021 (ກ່ອນປະຕິບັດວາລະແຫ່ງຊາດ) ແມ່ນເພີ່ມຂຶ້ນ 41,35% (5,78 ລ້ານໂຕນ), ສຳລັບໄລຍະ 5 ເດືອນ ປີ 2023 ສາມາດປະຕິບັດໄດ້ 154.545 ເຮັກຕາ ເທົ່າກັບ 24,31% ຂອງແຜນການ;

1.2 ດ້ານພະລັງງານ-ບໍ່ແຮ່:

ອ່ານຕໍ່ສະບັບໜ້າ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

ອຸດສາຫະກຳ ຈິ່ງຈູ້
中鉅實業

PV ຮ້ານຄຳພູວົງ
PHOUVONG JEWELRY

SCNG
SOMCHAYNEUK GROUP




# ຄວາມເຢັນ-ຄວາມຮ້ອນ

**# ຕົ້ນກົບເມກ**



ຄວາມຮ້ອນ ເກີດຈາກຫຼາຍສາເຫດ ຖ້າວ່າເວລາໃດໂລກຂາດຄວາມສົມດູນ ກໍຈະເຮັດໃຫ້ດິນຟ້າອາກາດປ່ຽນແປງ ສັດ-ມະນຸດອາໄສຢູ່ໜ້າໂລກກໍຢູ່ຍາກ; ຖ້າວ່າແນວຄິດຈິດໃຈຂອງຄົນຂາດຄວາມສົມດູນ ມີແຕ່ຄວາມໂລບຢາກໄດ້ ຫຼື ສ້າງແຕ່ວັດຖຸ ແຕ່ບໍ່ພັດທະນາຈິດໃຈ ກໍຈະພາໃຫ້ຄົນເຮົາຄິດເອົາແຕ່ສິ່ງທີ່ຕົນຢາກໄດ້ຝ່າຍດຽວ; ໂລກຮ້ອນເກີດຈາກຫຼາຍສາເຫດເຊັ່ນ: ເນື້ອທີ່ປ່າໄມ້ຫຼຸດລົງເຮັດໃຫ້ການສ້າງຄວາມສົມດູນທາງອາກາດມີການປ່ຽນແປງ.

ຄົນເຮົາຄວນຕັ້ງຂໍ້ສັງເກດເຕືອນຕົນເອງວ່າ ເມື່ອກ່ອນອາກາດບໍ່ຮ້ອນຍ້ອນຫຍັງ? ເຮົາມີແມ່ນ້ຳ-ມີຫ້ວຍຮ່ອງຄອງບຶງອຸດົມສົມບູນ ແລະ ມີຕົ້ນໄມ້-ປ່າໄມ້-ດົງປ່າ ເປັນໂຕສ້າງຄວາມສົມດູນໃຫ້ໂລກໜ້າຢູ່... ແຕ່ອາກາດທຸກມື້ປ່ຽນໄວ ປີນີ້ຮ້ອນສໍ່ານີ້ ປີໜ້າອາດຮ້ອນກວ່ານີ້! ຜູ້ຂຽນຄິດວ່າ: ແຕ່ລະຄົນ ແຕ່ລະຄອບຄົວສາມາດຊ່ວຍຫຼຸດຜ່ອນໂລກຮ້ອນໄດ້ດ້ວຍການປູກຕົ້ນໄມ້-ຮັກປ່າໄມ້-ຮັກທຳມະຊາດ ແລະ ເຫັນພິດໄພຂອງການທຳລາຍທຳມະຊາດ ທຳລາຍປ່າໄມ້, ການຊ່ວຍກັນປູກຕົ້ນໄມ້ຢູ່ບໍລິເວນພື້ນທີ່ອ້ອມເຮືອນ, ປູກໃສ່ສວນ ແລະ ໂຄສະນາປຸກລະດົມປູກໃສ່ປ່າສະຫງວນ, ປ່າຊຸມຊົນ, ສວນສາທາລະນະ.

ການປູກຕົ້ນໄມ້ຕ້ອງໄດ້ເຂົ້າໃຈວ່າ: ຕົ້ນໄມ້ແບບລາວເຮົາເຄີຍມີມາກ່ອນ ທີ່ຊ່ວຍໃຫ້ອາກາດເຢັນມີຕົ້ນຫຍັງແດ່? ບໍ່ແມ່ນນິຍົມກັນປູກພຽງແຕ່ຕົ້ນໄມ້ນຳເຂົ້າປະເພດໄມ້ປະດັບ ໄມ້ໂຊທີ່ໃຫ້ສີສັນງາມຊົ່ວຄາວ ແຕ່ບໍ່ໄດ້ສ້າງອົກຊີຊ່ວຍໃຫ້ເຢັນໄດ້; ປູກພັນໄມ້ຕ່າງປະເທດນອກຈາກຮັກສາຍາກແລ້ວ ຍັງມີລາຄາແພງ ເປືອງກວ່າຕົ້ນໄມ້ພັນລາວເດີມຄື ຕົ້ນຍູງ-ຍາງ-ດູ່-ແດງ... ຖ້າວ່າ ເຮົາຂາດວິທີຄິດ ຮັກສາປ່າ-ຮັກສານ້ຳ ຂາດການປູກຈິດສຳນຶກໃຫ້ເຍົາວະຊົນ ແລະ ແຕ່ລະຄອບຄົວ ຮັກຕົ້ນໄມ້-ປູກຕົ້ນໄມ້ ພວກເຂົາກໍຈະບໍ່ຮູ້ຄຸນຄ່າ.

ຜູ້ຂຽນເຫັນວ່າທ່າອ່ຽງຄົນເຮັດເຮືອນງາມ ຕັດຕົ້ນໄມ້ອອກ ຢາກໂຊເຮືອນງາມ ໂດຍໃຊ້ແອເຢັນແທນ ກໍຈະມີແຕ່ຄວາມເຢັນໃນຫ້ອງການ; ຫ້ອງນອນໃນເຮືອນ ແຕ່ອາກາດຢູ່ນອກຮ້ອນຢູ່ຍາກ ການປູກຈິດສຳນຶກ-ການຮັກສາຄວາມສົມດູນ ຈຶ່ງເປັນສິ່ງສຳຄັນບໍ່ຄວນເບິ່ງຂ້າມ!

# ຄວາມສະເໝີພາບ

**# ຕົ້ນແປກ**

ຄວາມສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽມກັນທາງສິດ, ຜົນປະໂຫຍດ, ຄວາມຜິດຊອບ ແລະ ໂອກາດເຂົ້າເຖິງແຫຼ່ງຊັບພະຍາກອນທຳມະຊາດ, ການເບິ່ງແຍງດູແລ, ການຮັກສາສຸຂະພາບ, ການສຶກສາ, ການບໍລິການ, ການປະກອບອາຊີບ ແລະ ການໄດ້ຮັບໜ້າທີ່ຕຳແໜ່ງໃນທຸກຂົງເຂດວຽກງານໃນສັງຄົມ, ຊຸມຊົນ ແລະ ຄອບຄົວ ທັງໄດ້ຮັບເງື່ອນໄຂເທົ່າທຽມກັນ ໃນການພັດທະນາຕົນເອງ; ປະຊາຊົນລາວໂດຍບໍ່ຈຳແນກເພດ, ອາຍຸ, ເຜົ່າ, ເຊື້ອຊາດ, ຖານະທາງດ້ານເສດຖະກິດ-ສັງຄົມ, ລະດັບການສຶກສາ, ຄວາມເຊື່ອ, ສາສະໜາ ແລະ ພູມລຳເນົາ ລ້ວນແຕ່ມີຄວາມສະເໝີພາບທາງດ້ານການເມືອງ-ການປົກຄອງ, ເສດຖະກິດ, ວັດທະນະທຳ, ການສຶກສາ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ວິທະຍາສາດເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສາຍພົວພັນຄອບຄົວ, ຄຳຮ້ອງທຸກ.

ລັດ ສປປ ລາວ ໄດ້ສົ່ງເສີມວຽກງານຄວາມສະເໝີພາບຍິງ-ຊາຍ ໂດຍການວາງນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນດຳເນີນງານ, ໂຄງການ, ສຶກສາອົບຮົມສ້າງຈິດສຳນຶກ, ປະກອບບຸກຄະລາກອນ, ສະໜອງຂໍ້ມູນຂ່າວສານ, ງົບປະມານ, ວັດຖຸອຸປະກອນ ແລະ ສ້າງທຸກເງື່ອນໄຂໃຫ້ຍິງ-ຊາຍ ໄດ້ຮັບການພັດທະນາຕົນເອງຢ່າງຮອບດ້ານ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານດັ່ງກ່າວ ພ້ອມທັງຊຸກຍູ້ປຸກລະດົມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມສະໜັບສະໜູນດ້ານທຶນຮອນ, ເຕັກນິກວິຊາການ, ວັດຖຸປັດໄຈຕ່າງໆ ເຂົ້າໃນວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ ໂດຍການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ ແລະ ມີການພັດທະນາ, ປະຕິບັດຕາມຖະແຫຼງການສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ.

ສະພາແຫ່ງຊາດ ໄດ້ຊຸກຍູ້ສົ່ງເສີມຄະນະສະມາຊິກເພດຍິງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ເຂົ້າຮ່ວມໃນກິດຈະກຳສົ່ງເສີມຄວາມສະເໝີພາບຍິງ-ຊາຍ; ຊີ້ນຳ-ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວ ຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໃນການຈັດຕັ້ງປະຕິບັດກົດໝາຍ, ແຜນຍຸດທະສາດ ແລະ ນະໂຍບາຍກ່ຽວກັບການເຊື່ອມສານທັດສະນະບົດບາດຍິງ-ຊາຍ ແລະ ສິດສະເໝີພາບຍິງ-ຊາຍ; ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ, ສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ດ້ວຍການປົກປ້ອງພັດທະນາແມ່ ແລະ ເດັກ; ສ້າງ, ເຂົ້າຮ່ວມ, ຕີຄວາມໝາຍ ແລະ ຈັດຕັ້ງປະຕິບັດຖະແຫຼງການ, ສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບແມ່ຍິງ ທີ່ ສປປ ລາວ ເປັນພາຄີ; ຈັດຕັ້ງ, ຊີ້ນຳ ແລະ ຕິດຕາມກວດກາການບໍລິການຮັບໃຊ້ປະຊາຊົນ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ກ່ຽວກັບວຽກງານຄວາມສະເໝີພາບຍິງ-ຊາຍ.

**ຄັດຈາກ: ຮ່າງກົດໝາຍວ່າດ້ວຍຄວາມສະເໝີພາບ-ຍິງຊາຍ**



# ຂຽນຄຳລາວໃຫ້ຖືກ

*#ຄູແສງ*

ການໃຊ້ຄຳ ທີ່ມີອັກສອນຄູ່ ອັນປະກອບດ້ວຍໝວດອັກສອນສູງ ແລະ ອັກສອນຕ່ຳ ທີ່ມີວັນນະຍຸດເອກ ່

| ອັກສອນສູງ | ອັກສອນຕ່ຳ |
|---|---|
| ຖ່ອງ : ຖ່ອງດຶງ | ທ່ອງ : ທັນທ່ອງທີ |
| ຖ່ານ : ຖ່ານໄຟ | ທ່ານ : ທ່ານໜໍ່ |
| ຜ່ອງ : ຜ່ອງໃສ | ພ່ອງ : ລາງພ່ອງ, ບົກພ່ອງ |
| ແຜ່ : ເຜື່ອແຜ່ | ແພ່ : ອອກແມ່ແພ່ລູກ |
| ໄຜ່ : ໄມ້ໄຜ່ | ໄພ່ : ບ່າວໄພ່ |
| ຝັ່ງ : ສອງຟາກຝັ່ງ | ຟັ່ງ : ຟ້າວຟັ່ງ |
| ແຫ່ : ແຫ່ແຫນ | ແຮ່ : ແຮ່ທາດ |
| ຫ່າງ : ຫ່າງໄກ | ຮ່າງ : ຮູບຮ່າງ |




# ວິທີເຮັດວຽກ

**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ຂ) ສັດຈະທຳ**

ແມ່ນຊື່ກົງ ບໍ່ຖືກໃຈຕົວເອງເປັນຫຼັກ ບໍ່ເຮັດສິ່ງທີ່ຊົ່ວ, ບໍ່ມີສິ່ງໃດຈະເຊື່ອງອຳຕໍ່ພັກ, ນອກຈາກປະໂຫຍດຂອງພັກ ກໍບໍ່ມີປະໂຫຍດແນວໃດຕ່າງຫາກ ພໍຈະຍົກຂຶ້ນມາຕໍ່ວ່າ, ຕໍ່ຂານກັນ. ເມື່ອພັກມອບວຽກໃຫ້ບໍ່ວ່າວຽກນ້ອຍ ຫຼື ວຽກໃຫຍ່ ກໍອອກແຮງເຮັດຢ່າງຕັ້ງອົກຕັ້ງໃຈ, ເຫັນສິ່ງໃດຖືກ ກໍຈຶ່ງເຮັດ ຈຶ່ງເວົ້າ ບໍ່ຢ້ານຜູ້ອື່ນຈະຕຳໜິຕິຕົນ, ເມື່ອຕຳໜິຄົນອື່ນ ກໍເຮັດໃນທາງຖືກຢູ່ສະເໝີ.

**ຄ) ຍຸຕິທຳ**

ແມ່ນບໍ່ມີວຽກໂລພາຕັນຫາ ຈະມາເຮັດໃຫ້ຕາມືດ, ສະນັ້ນ ສະໝອງຈຶ່ງໃສສະອາດ, ສະຫຼາດສະຫຼຽວເຂົ້າໃຈທິດສະດີງ່າຍ ຮູ້ຈັກເບິ່ງຄົນ, ຮູ້ຈັກກວດກາວຽກການ, ເພາະສະນັ້ນ ຄົນແນວນັ້ນ ຈຶ່ງຮູ້ຈັກເຮັດວຽກການທີ່ມີຜົນດີ ຫຼີກເວັ້ນວຽກງານທີ່ນຳຄວາມເສຍຫາຍມາສູ່ພັກ ຮູ້ຈັກສົ່ງເສີມຜູ້ດີຂຶ້ນ ແລະ ລະມັດລະວັງຕໍ່ຜູ້ທໍລະຍົດ ເພື່ອຜົນປະໂຫຍດຂອງພັກ ຂອງປະເທດຊາດ ແລະ ປະຊາຊົນແຕ່ຢ່າງດຽວ.

**ງ) ວິລິຍະທຳ**

ແມ່ນກ້າຫານ ບໍ່ຢ້ານກົວຕໍ່ສິ່ງໃດໆໝົດ, ພົບວຽກການອັນຖືກຕ້ອງ ກໍກ້າຫານ, ພົບຂໍ້ບົກພ່ອງ ກໍກ້າແກ້ໄຂດັດແປງ, ພົບຄວາມທຸກຍາກລຳບາກ ກໍກ້າອົດທົນ, ມີຄວາມກ້າຫານຕໍ່ສູ້ຕ້ານຢັນກັບກຽດ, ຊື່ສຽງ ຫຼື ຂອງທີ່ມີຄ່າ ເຊິ່ງບໍ່ເໝາະສົມກັບສະພາບການ, ຖ້າຈຳເປັນ ກໍກ້າເສຍສະຫຼະຊີວິດ ແລະ ເລືອດເນື້ອເພື່ອພັກ, ເພື່ອປະເທດຊາດ, ເພື່ອປະຊາຊົນ ບໍ່ມີຈັກເທື່ອທີ່ຈະຢຸດໆຢ່ອນໆ ລັງຖອຍໆ.

ອ່ານຕໍ່ສະບັບໜ້າ...



ສຸກສະບາຍຫາຍໂລກ

# ສັນຍານເຕືອນ

# ບົງເອີນ

ສິ່ງແວດລ້ອມອ້ອມຂ້າງໃນປັດຈຸບັນ ບໍ່ວ່າຈະເປັນການຮຽນ ຫຼື ການເຮັດວຽກ ລ້ວນແຕ່ສ້າງຄວາມເມື່ອຍລ້າ, ຕຶງຄຽດ ແລະ ກົດດັນ ໃຫ້ແກ່ເຮົາບໍ່ຫຼາຍກໍໜ້ອຍ ເຊິ່ງມັນຈະຄ່ອຍໆສະສົມສິ່ງເຫຼົ່ານັ້ນໄວ້ໃນຮ່າງກາຍ ແລະ ຈິດໃຈຂອງເຮົາ ຈົນເຖິງຈຸດທີ່ມັນສົ່ງສັນຍານອອກມາ ວ່າໃຫ້ຢຸດພຶດຕິກຳເຫຼົ່ານັ້ນ ກ່ອນມັນຈະຊຳເຮື້ອໄປ; ໃນຄໍລຳສຸກສະບາຍຫາຍໂຣຄສະບັບນີ້ ເຮົາມາຮູ້ຈັກກັບ 6 ສັນຍານເຕືອນອັນຕະລາຍທີ່ບົ່ງບອກວ່າເຖິງເວລາທີ່ຄວນພັກຜ່ອນໄດ້ແລ້ວ.



**1. ບໍ່ມີສະມາທິ:** ອາການທຳອິດມັກຈະບໍ່ມີສະມາທິ, ກະວົນກະວາຍ ແລະ ວິຕົກກັງວົນ ອາການເຫຼົ່ານີ້ ມັກເກີດຈາກການພັກຜ່ອນບໍ່ພຽງພໍ ແລະ ມີຄວາມວິຕົກກັງວົນຕໍ່ກັບບັນຫາຕ່າງໆທີ່ເກີດຂຶ້ນ.

**2. ນອນຫຼັບຍາກ:** ກ່ອນຊິຫຼັບບໍ່ແມ່ນເລື່ອງງ່າຍ ແຕ່ຍັງມັກຕື່ນກາງເດິກອີກ ພະຍາຍາມທີ່ຈະຂົ່ມຕາຫຼັບແຕ່ກໍບໍ່ສາມາດຫຼັບໄດ້ ເຊິ່ງຖ້າເປັນແບບນີ້ດົນໆ ກໍຈະສົ່ງຜົນບໍ່ດີຕໍ່ກັບສຸຂະພາບທາງຮ່າງກາຍ ກໍຄືຈິດໃຈ ສ່ວນຫຼາຍມັກເກີດຈາກຄວາມຕຶງຄຽດ ຫຼື ວິຕົກກັງວົນ ກັບບັນຫາທີ່ພົບເຈີໃນແຕ່ລະມື້.

**3. ກິນບໍ່ປົກກະຕິ:** ກິນຫຼາຍກວ່າປົກກະຕິ ຫຼື ກິນໜ້ອຍກວ່າປົກກະຕິ ເຊິ່ງອາການທີ່ເກີດຂຶ້ນໄດ້ຫຼາຍທີ່ສຸດກໍຄື ການກິນບໍ່ຖືກເວລາ, ມັກກິນຂະໜົມ ຫຼື ກິນຈຸກກິນຈິກແທນເຂົ້າ ເປັນສັນຍານຂອງຄວາມຕຶງຄຽດຢ່າງໜຶ່ງ ທີ່ເຕືອນໂຕເອງວ່າ ຄວນຢຸດພັກຈາກກິດຈະກຳທີ່ເຮັດໃຫ້ເຮົາຕຶງຄຽດ ແລະ ຄວນພັກຜ່ອນໄດ້ແລ້ວ.

**4. ບໍ່ມີແຮງຈູງໃຈ:** ໝົດກຳລັງໃຈ ບໍ່ຢາກລຸກໄປເຮັດຫຍັງ ບໍ່ວ່າຈະເປັນການເຮັດວຽກ ຫຼື ການຮຽນກໍຕາມ ຈົນເຖິງບໍ່ຢາກລຸກອອກຈາກຕຽງໄປພົບເຈີຜູ້ຄົນ ບໍ່ຢາກເຮັດຫຍັງທີ່ເຄີຍມັກມາກ່ອນ ອາການເຫຼົ່ານີ້ ສ່ວນໃຫຍ່ມາຈາກຄວາມເບື່ອ ຢູ່ໃນຈຸດທີ່ເບື່ອສຸດໆຈົນບໍ່ຢາກເຮັດຫຍັງເລີຍ.

**5. ບໍ່ສະບາຍຕະຫຼອດເວລາ:** ຮູ້ສຶກບໍ່ສະບາຍໂຕ, ເຈັບຫົວ, ເຈັບທ້ອງ ແລະ ບໍ່ສະບາຍຕະຫຼອດເວລາ ເຊິ່ງເກີດຈາກຄວາມຕຶງຄຽດ, ຄວາມວິຕົກກັງວົນ ແລະ ການພັກຜ່ອນບໍ່ພຽງພໍເຊິ່ງອາດຈະສົ່ງກະທົບຕໍ່ພູມຕ້ານທານ ເຮັດໃຫ້ບໍ່ສະບາຍໄດ້ຢ່າງງ່າຍດາຍ.

**6. ບໍ່ມີຄວາມສຸກກັບສິ່ງທີ່ມັກອີກຕໍ່ໄປ:** ຈາກທີ່ເຄີຍມັກເບິ່ງໜັງ-ຟັງເພງ, ມັກໄປນັ່ງຫຼິ້ນກິນລົມ ກາຍເປັນບໍ່ມັກອີກຕໍ່ໄປ ຮູ້ສຶກບໍ່ມີຄວາມສຸກອີກຕໍ່ໄປ ອາການເຫຼົ່ານີ້ອາດຈະເປັນອາການຂອງພາວະສິ້ນຍິນດີ ຫຼື ພາວະຊຶມເສົ້າກໍໄດ້ ຫາກຮູ້ສຶກແບບນີ້ຄວນພັກ ຫຼື ໄປປຶກສາແພດໝໍ ເພື່ອປິ່ນປົວຕໍ່ໄປ. ຫາກເກີດອາການເຫຼົ່ານີ້ຂຶ້ນກັບໂຕເອງ ທາງທີ່ດີຄວນຫາເວລາໃຫ້ໂຕເອງໄດ້ພັກຜ່ອນ, ລາພັກຈາກວຽກ ແລ້ວໄປທ່ຽວພັກຜ່ອນ, ມີເວລາໃຫ້ກັບໂຕເອງ ຫາກອາການມັນຫຼາຍເກີນໄປ ຈົນບໍ່ສາມາດແກ້ໄຂໄດ້ດ້ວຍໂຕເອງ ກໍຄວນໄປປຶກສາແພດໝໍຈະເປັນການດີທີ່ສຸດ.




## ຕາມຮອຍລຸງ
(ແດ່ວັນຄ້າຍວັນເກີດປະທານສຸພານຸວົງ)

ໂດຍ: ໃພ້ເໜືອ

❈ ຮຽນນີ້ແສນຊາບຊຶ້ງ ຝັງເລິກດວງຣືໄທ
ພູມໃຈໃນຜົນງານ ທ່ານປະທານພຽນສ້າງ
ແປງປູທາງເດີນໄວ້ ເປັນຫອນໄຟເຍືອງສ່ອງ
ຊີ້ສຽງດັງກຽດກ້ອງ ເບື້ອງຫຼັງກອງທັບສ້າງ ວາງໄວ້ແບບແຜນ

❈ແມ່ນວຽກໜັກບໍ່ຢ້ານ ຖວາຍມອບຊີວິ
ພຣິຊີບນຳພາລາວ ຕ່ອຍຕີມານຮ້າຍ
ລຸງໄດ້ທຳລາຍມ້າງ ການຄອງເມືອງສະໄໝເກົ່າ
ຍາດເອົາເອກະລາດໄວ້ ປະຊາໄດ້ໂຮ່ສະຫຼອງ

❈ໃຈຂອງລຸງແກ່ນກ້າ ຫອມຮັກປະຊາຊົນ
ເຮົາຄົນລາວທາງແຫນ ເຊີດຊູດັງກ້ອງ
ທົ່ວໂລກາຍ້ອງຍ້ອງ ຜົນງານຂອງທ່ານ
ປະທານສຸພານຸວົງຊື່ນີ້ ລືກ້ອງຊ່ຳໄກ

❈ ພີ່ນ້ອງລາວຈຶ່ງໄດ້ ວິໄລຮຸ່ງເຮືອງສີ
ຍ້ອນວ່າຄົນລາວມີ ທ່ານຜູ້ນຳຫານກ້າ
ປັນຍາດີໃສແຈ້ງ ເປັນແວ່ນແຍງເຍືອງສ່ອງ
ລາວເຮືອງຮອງຮຸ່ງເຫຼື້ອມ ປະຊາແຍ້ມຊື່ນບານ

❈ ປະຕິຍານຕັ້ງ ຝັງເຊື່ອຄຳສອນ
ຈະບໍ່ຄອນແຄນໄຫວ ຊີໄຕ່ຕາມລຸງສ້າງ
ແບບຢ່າງລຸງມີໄວ້ ນຳໄປສານຕໍ່
ບໍ່ໃຫ້ເສຍຊາດເຊື້ອ ລຸງສ້າງສືບມາ ດອກນາ!

❈ ຂໍຈຳຈາລຶກໄວ້ ເປົາແນບໃນຊວງ
ດຸ່ງເດີນໄປຕາມຮອຍ ຂີດໝາຍວາງໄວ້
ໜັກເອົາເປົາໃຈສູ້ ມີເກາງກົວໄຫວຫວັ່ນ
ເອົາບົດຮຽນທ່ານນັ້ນ ເປັນແກ້ວແວ່ນແຍງ ແທ້ນາ!



## ຫ້າຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❈ **ກອງ**ປະຊຸມສະພາ ພວມເດີນທາງມາຮອດ**ອາທິດທີສອງ** ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າທົ່ວປະເທດ **ຈອບຊອມແນມສັງເກດ**ຜ່ານສື່ ຢ່າງໃຈ ຈົດໃຈຈໍ່ ບັນດາທ່ານ **ສສຊ** ກໍໄດ້ຕັ້ງເອີກຕັ້ງໃຈ ມີຄຳເຫັນໃສ່ຫຼາຍບັນຫາ ເດັ່ນກວ່າໝູ່ແມ່ນ**ເງິນຕາ** ຄ່າກີບລາວຫຼຸດລ່ອງ **ເງິນກີບເອີຍ!** ຂໍໃຫ້ທອງສິດຂຶ້ນ ດູແລຕົນໃຫ້ສູງຄ່າ **ແນ່ຕ້ອນ** ອອນຊຸມໃສ່ເລັ່ງແກ້ ໃຫ້ດີຂຶ້ນລື່ນກວ່າຫຼັງ ປະຊາຫວັງເພິ່ງຊົ້ນ ຄຳປາກອັນສັກສິດ **ສສຊ ເອີຍ!** ສົມວ່າເປັນຕົວແທນ ເຜົ່າປະຊາຊາວເຊື້ອ ປວງຊົນເໜືອກາງໃຕ້ ສົ່ງແຮງໃຈມາຍັງທ່ານ ຝາກອວນອານທ່ານເອົ້າ ໄຂ່ຂ້ອງພະໄທ **ໃຫ້ແດ່ຕ້ອນ!.**

❈ **ວັນ**ທີ 13 **ກໍລະກົດນີ້** ແມ່ນວັນຄ້າຍວັນເກີດຂອງປະທານ **ສຸພານຸວົງ** ຄົບຮອບ **114** ປີ ແລະໂອກາດດຽວກັນນີ້ຍັງແມ່ນວັນອະນຸຮັກສັດນ້ຳສັດປ່າຂອງລາວ ຊາວປະຊາດີໃຈຮ່ວມໂຮມສະຫຼອງຕ້ອນ ລະນຶກບຸນຄຸນໄວ້ ເໜືອນຫອນໄພເຍືອງສ່ອງ ຂໍເຊີນຊວນພີ່ນ້ອງ ງົດລ່າສັດທັງຢູ່ບົກແລະນ້ຳ ກະທຳສ້າງສ່ວນກຸສົນ **ຊອບແລ້ວ!**

## ຊອບຍິ້ມ

# ແອ່ນຕຸ້ງ

### ພໍ່ກູໄວກວ່າ

ເດັກນ້ອຍ 3 ຄົນຂີ້ໂມ້ໃສ່ກັນ

1 ພໍ່ກູຂັບລົດໄວ 350 ກິໂລແມັດຕໍ່ຊົ່ວໂມງ

2 ພໍ່ກູແຮ່ງຂັບໄວ 900 ກິໂລແມັດຕໍ່ຊົ່ວໂມງ

3 ບໍ່ໄວທໍ່ພໍ່ກູດອກ ລາວເລີກການ 4 ໂມງ ແຕ່ກັບຮອດເຮືອນ 3 ໂມງເຄິ່ງ.



## ຄະຕິເຕືອນໃຈ

#ດອກຫຍ້າ

ໃຫ້ເຈົ້າເອົາຄວາມຮູ້ ຫາກິນທາງຊອບ
ຄວາມຮູ້ມີຢູ່ແລ້ວ ກິນໄດ້ຊົ່ວຊີວາ
ຢ່າໄດ້ເອົາຄວາມຮູ້ ຫາກິນທາງບໍ່ແມ່ນ
ມັນຊິດຶງລ່ອງບ້າວ ຕົວເຈົ້າໃຫ້ລອດດາຍ




# ລຸ້ນ

"ໄວລຸ້ນປັດຈຸບັນ ມັກເຮັດແຕ່ແນວແປກໆເວີຍ!" ຊາຍໄວກາງຄົນ ເວົ້າກັບຄູ່ສົນທະນາ ດ້ວຍຄວາມເມື່ອຍໃຈ.

"ພວກລຸ້ນອ້າຍ ຈັ່ງແມ່ນເຂົາສະບາຍ ບໍ່ເສັງຍາກຄືລຸ້ນພວກເຮົາ" ຍິງສາວໄວສິບເຈັດ ກ່າວກັບໝູ່ທີ່ນັ່ງຄຽງຂ້າງຢ່າງອາລົມເສຍ ເມື່ອເຫັນແຜນການເສັງຈົບຊັ້ນ ທີ່ທາງຄູປະຈຳຫ້ອງມາເຜີຍແຜ່.

"ຢາກໄດ້ລຸ້ນໃດນໍ, ອ້າຍ?" ສຽງຫວານໆ ຂອງຜູ້ຂາຍໃນຮ້ານຂາຍໂທລະສັບມືຖື ຖາມລູກຄ້າທີ່ພວມຊອກຫາມືຖືທີ່ຖືກໃຈ.

"ເຈົ້າຊິລຸ້ນທີມໃດ ລະຫວ່າງ ທີມຊາດສະເປນ ກັບທີມຊາດເຢຍລະມັນ?" ນັກເຊຍບານເຈົ້າເກົ່າເວົ້າກັບໝູ່ຂອງລາວ.

"ໂຕບໍ່ຢາກລຸ້ນໂຊກນຳເຂົາຫວາ?" ຊາຍໜຸ່ມງວາກໜ້າຖາມໝູ່ທີ່ຢູ່ທາງຂ້າງ ພ້ອມກັບເລືອກໃບຫວຍທີ່ວາງຢູ່ຕໍ່ໜ້າ.

ຈາກຄຳເວົ້າ ຄຳວ່າ ທີ່ຍົກມາຂ້າງເທິງ ເຮົາຈະເຫັນໄດ້ວ່າ ຄຳວ່າ ລຸ້ນ"ໄດ້ຖືກນຳໃຊ້ຢູ່ໃນຫຼາຍຄວາມໝາຍ ດັ່ງນີ້:

ລຸ້ນ 1 ໃຊ້ໃນຄວາມໝາຍ "ຣຸ່ນ" ໄວຢ່າງເຂົ້າສູ່ໄວບ່າວສາວ

ລຸ້ນ 2 ໃຊ້ໃນຄວາມໝາຍ "ຣຸ່ນ" ສະໄໝຂອງຄົນທີ່ກຳນົດເປັນໄລຍະ

ລຸ້ນ 3 ໃຊ້ໃນຄວາມໝາຍ "ຣຸ່ນ" ສະໄໝຂອງສິ່ງຂອງທີ່ກຳນົດເປັນໄລຍະ

ລຸ້ນ 4 ໃຊ້ໃນຄວາມໝາຍ "ເອົາໃຈຊ່ອຍ"

ລຸ້ນ 5 ໃຊ້ໃນຄວາມໝາຍ "ສ່ຽງ"

ຫາກພວກເຮົາ ເປີດວັດຈະນານຸກົມພາສາລາວແຕ່ລະເຫຼັ້ມເບິ່ງ ກໍບໍ່ສູ້ເຫັນຄຳວ່າ "ລຸ້ນ" ມີແຕ່ຄຳວ່າ "ຣຸ່ນ" (ຍົກເວັ້ນແຕ່ໃນວັດຈະນານຸກົມພາສາລາວ ຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ທີ່ໄດ້ບັນຈຄຳວ່າ ໄວລຸ້ນ ໃສ່). ໃນເວລາເວົ້າ ເກືອບຮ້ອຍສ່ວນຮ້ອຍກໍອອກສຽງຄຳນີ້ວ່າ "ລຸ້ນ". ແຕ່ເວລາຂຽນເປັນລາຍຫຼັກອັກສອນ ໃນຂໍ້ 1-3 ສ່ວນຫຼາຍມັກຈະຂຽນເປັນ "ຣຸ່ນ" ເພື່ອໃຫ້ຖືກຕາມຄວາມໝາຍທີ່ມີໃນວັດຈະນານຸກົມ.

ສ່ວນໃນຂໍ້ 4-5 ນັ້ນ ຖືວ່າແມ່ນຄຳພ້ອມສຽງ "ລຸ້ນ" ທີ່ມີຄວາມໝາຍແຕກຕ່າງ ເຊິ່ງຫາກໍຖືກນຳເຂົ້າມາໃສ່ໃນສຳນວນຄຳເວົ້າຂອງລາວເຮົາ ເມື່ອປະມານຊາວປີມານີ້ເອງ.

ຄວາມຈິງແລ້ວ ຄຳວ່າ "ລຸ້ນ" ໃນຄວາມໝາຍວ່າ "ເອົາໃຈຊ່ອຍ" ແມ່ນມາຈາກພາສາຈີນແຕ້ຈິ໋ວ ເຊິ່ງສື່ມວນຊົນຝ່າຍກິລາໄທໄດ້ນຳມາໃຊ້; ຈາກນັ້ນ "ລຸ້ນ" ກໍຖືກນຳມາໃຊ້ເຂົ້າໃນວົງການໂຄສະນາທຸລະກິດ ເຮັດໃຫ້ຄຳນີ້ມີຄວາມໝາຍກາຍເປັນ "ສ່ຽງ" ໃນທີ່ສຸດ.

ຍ້ອນອິດທິພົນທາງສື່ໜັງສືພິມ ແລະ ໂທລະພາບປະເທດເພື່ອນບ້ານ ເຮັດໃຫ້ບັນດາສື່ມວນຊົນລາວ ໄດ້ຮັບຜົນກະທົບ ຄຳວ່າ "ລຸ້ນ" ໃນຄວາມໝາຍ "ເອົາໃຈຊ່ອຍ" ແລະ "ສ່ຽງ" ກໍແຜ່ກະຈາຍໄປທົ່ວທຸກການໂຄສະນາ ທັງທາງໜ້າໜັງສືພິມ, ວາລະສານ ຕະຫຼອດຮອດວິທະຍຸໂທລະພາບ"

ປັດຈຸບັນນີ້ ຄຳວ່າ "ສ່ຽງໂຊກ" ໄດ້ຄ່ອຍໆຕາຍໄປ ໂດຍການເຂົ້າມາແທນທີ່ຂອງຄຳວ່າ "ລຸ້ນໂຊກ".

## ຄຳຄົມ ສົມທີ່ຄິດ

ຈຸດສຸມພະລັງຂອງມະນຸດນັ້ນ ຢູ່ທີ່ຫົວໃຈ ຈົ່ງເຊື່ອໃຈຂອງຕົນເອງ ຢ່າປະຕິເສດທີ່ຈະຮັບຟັງຫົວໃຈຂອງຕົນເອງ ເພາະວ່າຫົວໃຈສາມາດພະຍາກອນສິ່ງຕ່າງໆສະເໝີ.




# ອິນໂດເນເຊຍ ປະກາດວັນພັກຍາວເພື່ອກະຕຸ້ນເສດຖະກິດ



ມີການລາຍງານຂ່າວຈາກນະຄອນຫຼວງຈາກາຕາ ປະເທດອິນໂດເນເຊຍເມື່ອວັນທີ 22 ມິຖຸນາ 2023 ຜ່ານມາ: ທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍປະກາດນັບແຕ່ 28 ມິຖຸນາ ຫາ ວັນທີ 2 ກໍລະກົດ ເປັນວັນພັກຍາວ 5 ວັນ ເພື່ອກະຕຸ້ນເສດຖະກິດ ໂດຍສະເພາະໃນພາກການທ່ອງທ່ຽວ ໃຫ້ຂະຫຍາຍຕົວຢ່າງເຂັ້ມແຂງຫລັງຈາກຍົກເລີກມາດຕະການຈຳກັດການແຜ່ລະບາດໂຄວິດ-19 ໃນເວລາ ອັນສັ້ນ.

ນອກນີ້ ຍັງເປັນການສົ່ງເສີມໃຫ້ມີການໃຊ້ຈ່າຍດ້ານອຸປະໂພກ-ບໍລິໂພກຫລາຍຂຶ້ນກວ່າເກົ່າ ເພື່ອຊຸກຍູ້ໃຫ້ເສດຖະກິດຟື້ນໂຕໄວຂຶ້ນ.

# ຜູ້ນຳຍີ່ປຸ່ນ ຢືນຢັນຈະບໍ່ຍຸບສະພາກ່ອນໝົດວາລະ



ຜູ້ນຳຍີ່ປຸ່ນ ຢືນຢັນບໍ່ມີແຜນຍຸບສະພາຜູ້ແທນລາສະດອນ, ຂະນະທີ່ຝ່າຍຄ້ານກຽມຍື່ນຍັດຕິຂໍເປີດອະພິປາຍທົ່ວໄປ ແລະ ລົງມະຕິບໍ່ໄວ້ວາງໃຈ.

ອີງຕາມການລາຍງານຂ່າວເມື່ອວັນທີ 16 ມິຖຸນາ 2023 ໃຫ້ຮູ້ວ່າ: ທ່ານ ຟູມິໂອະ ຄິຊິດະ ນາຍົກລັດຖະມົນຕີຍີ່ປຸ່ນ ໄດ້ເປີດເຜີຍວ່າ: ບໍ່ມີແຜນປະກາດຍຸບສະພາຜູ້ແທນລາສະດອນ ເພື່ອຈັດການເລືອກຕັ້ງທົ່ວໄປກ່ອນກຳນົດ ຫຼັງຄົບສະໄໝກອງປະຊຸມປັດຈຸບັນໃນວັນທີ 21 ມິຖຸນານີ້.

ບັນຫາດັ່ງກ່າວ ຖືເປັນບັນຫາເຄັ່ງຮ້ອນໃນສັງຄົມຍີ່ປຸ່ນໃນອາທິດຜ່ານມາ ເນື່ອງຈາກຝ່າຍຄ້ານກຽມຍື່ນຍັດຕິຂໍເປີດອະພິປາຍທົ່ວໄປ ແລະ ລົງມະຕິບໍ່ໄວ້ວາງໃຈລັດຖະບານທ່ານ ຟູມິໂອະ ຄິຊິດະ ເມື່ອສະພາກັບເຂົ້າສູ່ວາລະກອງປະຊຸມ ເຊິ່ງຜູ້ນຳຍີ່ປຸ່ນ ກ່າວເຖິງເລື່ອງນີ້ວ່າ: ທ່ານໄດ້ເນັ້ນໜັກສະມາຊິກພັກເສລີປະຊາທິປະໄຕ (LDP) ທຸກຄົນໃຫ້ລົງມະຕິຄັດຄ້ານ.

ເຖິງຢ່າງໃດກໍຕາມ, ທຸກຝ່າຍໃຫ້ຄວາມເຫັນໄປໃນທາງດຽວກັນວ່າ: ການອະພິປາຍທົ່ວໄປ ແລະ ລົງມະຕິບໍ່ໄວ້ວາງໃຈຄັ້ງນີ້ ເປັນພຽງສັນຍະລັກ ເນື່ອງຈາກພັກ LDP ແລະ ພັກໂຄເມອິໂຕະ ເຊິ່ງເປັນພັນທະມິດຄອງສຽງສ່ວນຫລາຍລວມກັນເກີນເຄິ່ງໜຶ່ງໃນສະພາແລະການພົວພັນຂອງພັກຝ່າຍຄ້ານເຊິ່ງບໍ່ໄດ້ເປັນເອກະພາບໃນຄວາມເປັນຈິງ.

ເຖິງວ່າການເລືອກຕັ້ງທົ່ວໄປຕາມກຳນົດຄັ້ງໃໝ່ຂອງຍີ່ປຸ່ນ ຄືໃນປີ 2025 ແຕ່ພັກ LDP ມີກຳນົດຈັດການແຂ່ງຂັນພາຍໃນ ເພື່ອເລືອກຫົວໜ້າພັກຄົນໃໝ່ໃນປີໜ້າ ແລະ ຄວາມນິຍົມຂອງທ່ານ ຟູມິໂອະ ຄິຊິດະ ແລະ ຄະນະລັດຖະບານ ຍັງບໍ່ຄ່ອຍດີໃນສາຍຕາປະຊາຊົນ ໂດຍຜົນການສຳຫຼວດຂອງສຳນັກຂ່າວຈິຈິ ປາກົດວ່າ: ຄະແນນການຍອມຮັບລັດຖະບານທ່ານ ຄິຊິດະ ມີ 35,1% ຫຼຸດລົງ 3,1% ຈາກການສຳຫລວດໃນໄລຍະເວລາດຽວກັນຂອງເດືອນພຶດສະພາຜ່ານມາ ແລະ ເປັນສະຖິຕິຕ່ຳທີ່ສຸດໃນຮອບ 5 ເດືອນ.

# ຄະນະກຳມະການເລືອກຕັ້ງເຊຍຣາເລອອນ ປະກາດຜົນການເລືອກຕັ້ງປະທານາທິບໍດີ



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ຄະນະກຳມະການເລືອກຕັ້ງເຊຍຣາເລອອນ ເຊິ່ງເປັນປະເທດຢູ່ໃນອາຟຣິກາຕາເວັນຕົກ ໄດ້ປະກາດໃນວັນທີ 27 ມິຖຸນາຜ່ານມາວ່າ: ທ່ານ ຈູລິວສ ມາດາ ບີໂອ ປະທານາທິບໍດີຄົນປັດຈຸບັນ, ຜູ້ສະໝັກຮັບເລືອກຕັ້ງຈາກພັກປະຊາຊົນເຊຍຣາເລອອນ ໄດ້ຮັບເລືອກຕັ້ງເປັນປະທານາທິບໍດີອີກສະໄໝໜຶ່ງ.

ຄະນະກຳມະການເລືອກຕັ້ງໄດ້ກ່າວໃນກອງປະຊຸມຖະແຫຼງຂ່າວທີ່ຈັດຂຶ້ນໃນມື້ດຽວກັນວ່າ, ອັດຕາສ່ວນຄະແນນສຽງຂອງທ່ານ ຈູລິວສ ມາດາ ບີໂອ ໄດ້ປະມານ 56,17%, ສ່ວນທ່ານ ຊາມູຣາ ກາມາຣາ ທີ່ເປັນຄູ່ແຂ່ງຂັນຄົນສຳຄັນ ຜູ້ສະໝັກຮັບເລືອກຕັ້ງຈາກພັກສະພາປະຊາຊົນທົ່ວປະເທດ ເຊິ່ງເປັນພັກຝ່າຍຄ້ານໃຫຍ່ທີ່ສຸດ ໄດ້ຄະແນນສຽງປະມານ 41,16%.

ຫຼັງຈາກນັ້ນບໍ່ດົນ, ທ່ານ ຊາມູຣາ ກາມາຣາ ໄດ້ປະກາດຜ່ານສື່ສັງຄົມອອນລາຍວ່າ: ຂໍປະຕິເສດບໍ່ຮັບຮອງຜົນການເລືອກຕັ້ງດັ່ງກ່າວ.

ກະຊວງສາທາລະນະສຸກ, ສູນສະຖິຕິ ແລະ ຂ່າວສານສາທາລະນະສຸກ

## ສະຖານະການ ການຕິດເຊື້ອ COVID-19 ໃນ ສປປ ລາວ 30 ມິຖຸນາ 2023



| ກວດວິເຄາະ | ຕິດເຊື້ອໃໝ່ | ຕິດເຊື້ອລວມ | ເສຍຊີວິດໃໝ່ | ເສຍຊີວິດສະສົມ |
|---|---|---|---|---|
| 139 | 9 | 218,474 | 0 | 671 |

| ແຂວງ | ກວດເຊື້ອ | ພາຍໃນ | ນຳເຂົ້າ | ແຂວງ | ກວດເຊື້ອ | ພາຍໃນ | ນຳເຂົ້າ |
|---|---|---|---|---|---|---|---|
| ນະຄອນຫຼວງວຽງຈັນ | 12 | 4 | 0 | ເຊກອງ | 0 | 0 | 0 |
| ຈຳປາສັກ | 43 | 1 | 0 | ຫຼວງພະບາງ | 36 | 0 | 0 |
| ຄຳມ່ວນ | 42 | 1 | 0 | ວຽງຈັນ | 0 | 0 | 0 |
| ອຸດົມໄຊ | 0 | 0 | 0 | ໄຊສົມບູນ | 0 | 0 | 0 |
| ຫຼວງນ້ຳທາ | 6 | 3 | 0 | ໄຊຍະບູລີ | 0 | 0 | 0 |
| ຫົວພັນ | 0 | 0 | 0 | ບໍ່ແກ້ວ | 0 | 0 | 0 |
| ສະຫວັນນະເຂດ | 0 | 0 | 0 | ຜົ້ງສາລີ | 0 | 0 | 0 |
| ສາລະວັນ | 0 | 0 | 0 | ອັດຕະປື | 0 | 0 | 0 |
| ຊຽງຂວາງ | 0 | 0 | 0 | ບໍລິຄຳໄຊ | 0 | 0 | 0 |

ເກັບໄວ້ ໄດ້ບົດຮຽນ
❖ ວິເສດ ສະແຫວງສຶກສາ

# ຜູ້ນຳທ່ຽວຄືຫູຕາ ແລະ ແຂນຂາຂອງວຽກທ່ອງທ່ຽວ

ຖ້າຈຳບໍ່ຜິດ, ປີທ່ອງທ່ຽວລາວທີ່ກຳນົດໃສ່ປີ 2024 ນີ້ ເປັນຄັ້ງທີ 3 ຄັ້ງທີ 1 ແມ່ນ 1999-2000, ຄັ້ງທີ 2 ຄືແມ່ນປີທີ່ພວກເຮົາຈັດກອງປະຊຸມສຸດຍອດອາຊຽນ, 2016. ປີ 2024 ຈະເປັນປີທີ່ລາວພວກເຮົາໄດ້ຮັບກຽດເປັນເຈົ້າພາບກອງປະຊຸມ ອາຊຽນ ຊຶ່ງກວມເອົາທັງກອງປະຊຸມສຸດຍອດ, ກອງປະຊຸມລັດຖະມົນຕີການຕ່າງປະເທດ ແລະ ກະຊວງຂະແໜງການທີ່ປິ່ນອ້ອມ 3 ເສົາຄໍ້າຂອງ ອາຊຽນຄື ດ້ານຄວາມໝັ້ນຄົງ, ເສດຖະກິດ ແລະ ສັງຄົມ-ວັດທະນະທຳ.

ເພື່ອເປັນບົດຮຽນແຮໄວ້ ສຳລັບປີ ທ່ອງທ່ຽວ, ຜູ້ຂຽນຂໍຈັດສັນກັ່ນຕອງເອົາບາງບົດຮຽນເດັດໆຂອງບາງປະເທດ ກ່ຽວກັບການພັດທະນາອຸດສາຫະກຳທ່ອງທ່ຽວ. ແຕ່ລະບົດຮຽນຈະຄັດເຂົ້າສັ້ນໆ ເອົາແຕ່ຕັບແຕ່ບີຂອງມັນ. ຂໍ້ມູນທັງໝົດທີ່ຊິເວົ້າສູ່ຟັງນີ້ ໄດ້ມາຈາກ ໜັງສືພິມ ຕ່າງປະເທດ ແລະ ໜັງສືພິມພາຍໃນຂອງພວກເຮົາແຕ່ປີ 2015 ມາຮອດປັດຈຸບັນ. ຂໍສະເໜີໄປເປັນແຕ່ລະປະເທດດັ່ງນີ້:

**ກຳປູເຈຍ:** ບົດຮຽນທີ່ຄວນພິຈາລະນາຖອດຖອນຈາກກຳປູເຈຍກໍຄືເລື່ອງມາດຕະການຄຸ້ມຄອງ ແລະຄວບຄຸມການເຄື່ອນໄຫວຂອງບັນດາຜູ້ນຳທ່ຽວໃຫ້ຢູ່ຂອບຂອງກົດໝາຍ, ປ້ອງກັນບໍ່ໃຫ້ມີຜູ້ນຳທ່ຽວເຖື່ອນ, ຊອກຍາດອາຊີບຜູ້ນຳທ່ຽວພາຍໃນທີ່ຈົດທະບຽນ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍແທ້ໆ. ໃນສອງ-ສາມປີຜ່ານມານີ້, ບັນດາ ຜູ້ນຳທ່ຽວເຖື່ອນໄດ້ເພີ່ມຈຳນວນຂຶ້ນປານດອກເຫັດຢູ່ກຳປູເຈຍ. ຜູ້ນຳທ່ຽວຜິດກົດໝາຍເຫຼົ່ານີ້ແມ່ນຄົນຕ່າງປະເທດທີ່ອາໄສຢູ່ກຳປູເຈຍ, ບາງຄົນກໍໄດ້ສິດຢູ່ແບບຖາວອນ, ບາງຄົນກໍໄດ້ສັນຊາດກຳປູເຈຍ, ຮູ້ພາສາ, ຮີດຄອງປະເພນີກຳປູເຈຍເປັນຢ່າງດີ. ເວລາມີນັກທ່ອງທ່ຽວຈາກປະເທດກຳເນີດຂອງພວກຕົນເຂົ້າໄປກຳປູເຈຍ, ພວກນຳທ່ຽວເຫຼົ່ານີ້ກໍຈະລັດຄິວໃຫ້ບໍລິການນຳທ່ຽວ ຫຼື ແປພາສາດ້ວຍ ລາຄາທີ່ຖືກກວ່າ (ເພາະບໍ່ໄດ້ລົງຈົດທະບຽນ) ດັ່ງນັ້ນພວກເຂົາຈຶ່ງໄດ້ປຽບທັງຂຶ້ນທັງລ່ອງ. ນອກຈາກນັ້ນ ນັກທ່ອງທ່ຽວເປັນກຸ່ມໃຫຍ່ຈາກບາງປະເທດ ກໍມັກຈະເອົາຜູ້ນຳທ່ຽວຂອງຕົນເອງມາພ້ອມ. ໃນທີ່ສຸດ ທາງ



ກຳປູເຈຍກໍອອກກົດລະບຽບໄມ້ຕາຍເພື່ອເອົາຜິດຜູ້ນຳທ່ຽວເຖື່ອນເຫຼົ່ານີ້ ພ້ອມທັງຮຽກຮ້ອງໃຫ້ທົ່ວສັງຄົມ ເປັນຫູເປັນຕາ ຕິດຕາມຄົນຕ່າງປະເທດທີ່ອາໄສຢູ່ກຳປູເຈຍເປັນເວລາດົນນານ ເພື່ອບໍ່ໃຫ້ພວກເຂົາລັກລອບໃຫ້ບໍລິການແປພາສາ ຫຼື ນຳທ່ຽວເດັດຂາດ.

**ຫວຽດນາມ:** ເມື່ອສອງປີຜ່ານມາມີຂ່າວວ່າ ທາງການຫວຽດນາມ ໄດ້ອອກລະບຽບການບັງຄັບໃຫ້ຜູ້ນຳທ່ຽວ, ຜູ້ແປພາສາໃຫ້ນັກທ່ອງທ່ຽວ ຕ້ອງຈົດທະບຽນກັບຫ້ອງການທ່ອງທ່ຽວທາງການ ຫຼື ກັບ ບໍລິສັດ ທ່ອງທ່ຽວ ທີ່ໄດ້ທະບຽນຖືກຕ້ອງຕາມກົດໝາຍ ທັງນີ້ກໍເພື່ອກຳຈັດພວກເຄື່ອນໄຫວເຖື່ອນ, ໃຜບໍ່ຈົດທະບຽນກໍຈະຖືກຕັດສິດເຄື່ອນໄຫວ. ລະບຽບການນີ້ໃນເບື້ອງຕົ້ນກໍພົບກັບກະແສຄັດຄ້ານ ໂດຍມີການອ້າງວ່າຈະເຮັດໃຫ້ຜູ້ນຳທ່ຽວຈຳນວນຫຼວງຫຼາຍຕົກງານ ແຕ່ທາງການຫວຽດນາມບໍ່ສົນ, ລະບຽບເປັນລະບຽບ. ການຈົດທະບຽນຈະຊ່ວຍໃຫ້ທາງການຄຸ້ມຄອງຜູ້ນຳທ່ຽວໄດ້ດີ ແລະ ທົ່ວເຖິງ.

**ສ.ປ.ຈີນ:** ເມື່ອປະມານ 5 ປີຜ່ານມາທາງການຈີນໄດ້ອອກກົດລະບຽບເຫຼັກ ເພື່ອຄຸ້ມຄອງຜູ້ນຳທ່ຽວໃຫ້ຖືກຕ້ອງຕາມກົດໝາຍທ່ອງທ່ຽວ ແລະ ຈັນຍາບັນໃນອາຊີບ ໂດຍໄດ້ກຳນົດຂໍ້ຫ້າມຫຼາຍຂໍ້ເຊັ່ນ: ຫ້າມຕົ້ມຕຸ໋ນຂູດຮີດເງິນນັກທ່ອງທ່ຽວ, ຫ້າມຕິດຄໍເຂົ້າກັບຮ້ານຄ້າ-ຮ້ານອາຫານ ເພື່ອຜູກຂາດໃຫ້ນັກທ່ອງທ່ຽວໃຊ້ບໍລິການສະເພາະ, ຫ້າມຊັກຊວນນັກທ່ອງທ່ຽວເຮັດໂລງເລງ ທີ່ພົວພັນກັບຄວາມໝັ້ນຄົງຂອງຊາດ, ຢາເສບຕິດ, ໂສເພນີ, ການລັກລອບຊື້ຂາຍບູຮານນະຄະດີ ທາງປະຫວັດສາດ ແລະ ວັດທະນະທຳ ແລະ ອື່ນໆ (ເຊີນຕິດຕາມເລື່ອງຂໍ້ຫ້າມສຳລັບນັກທ່ອງທ່ຽວໃນສະບັບໜ້າ).




## ກູບໍ່ສົນ

*# ບ່າວກະບີ້*

ນາງສີ ມັກຈະເຕືອນຜົວເປັນຜົວຢູ່ສະເໝີວ່າ ທຸກສິ່ງທຸກຢ່າງທີ່ມີຢູ່ໃນເຮືອນຫັ້ນ ລ້ວນແຕ່ແມ່ນຂົມບັດຂອງນາງອ້ອຍຕ້ອຍ... ບໍ່ວ່າຈະເປັນໂທລະພາບ, ເຄື່ອງເຮືອນ, ຕູ້ເຢັນ, ຮູບແຕ້ມ ແລະ ອື່ນໆ, ສິ່ງຂອງເຫຼົ່ານີ້ ນາງຊື້ມາດ້ວຍເງິນຂອງນາງເອງ. ພໍຕົກຮອດທ່ຽງຄືນຄືນໜຶ່ງ, ສຽງດັງຢູ່ຊັ້ນລຸ່ມ ເຮັດໃຫ້ນາງຕົກສະມ່າ. ນາງ ສີ ຄວັກຜົວໃຫ້ຕື່ນຂຶ້ນມາ.

"ອ້າຍກີ... ອ້າຍກີ... ອ້າຍກີ! ລຸກທະແມ້ ພວກໂຈນມັນເຂົ້າມາຊັ້ນລຸ່ມແລ້ວໃດຫັ້ນ".

ຝ່າຍທ້າວກີ ເວົ້າຕອບສຽງລຶດໆວ່າ :

"ຢ່າເຍີ, ປ່ອຍໃຫ້ພວກມັນລັກ, ກູບໍ່ສົນ, ຢູ່ຫັ້ນບໍ່ມີຫຍັງເປັນຂອງກູດອກ"

## I DON'T CARE

*# BAOKBU*

Mrs Sy was a ways fond of reminding her husband that everything in the house was hers... be it a TV set, furniture, refrigerator, paintings and so on. She bought them with her own money. In the middle of the night, she was startled by noises downstairs.

She shook her husband, " Ky Ky Ky " she whispered, " Get up. There are burglars downstairs !"

Mr. Ky echoed wearily. " Well, let them burgle I don't care, there's nothing of mine down there "




**ປ່າຍອດນ້ຳ ຄືຕົ້ນທາງຂອງຊີວິດ**

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກິ່ງໃຈ ແສງອຳພັນ
ນາງ ສຸພາວັນ ທອນສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ບົດຕາ ຄຸນປາກດີ